ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

10 - 17 ສິງຫາ 2023
ປີທີ 12
ສະບັບທີ 933
ລາຍສັປະດາ


# ປະທານສະພາແຫ່ງຊາດ ນຳພາຄະນະຜູ້ແທນຂັ້ນສູງ ເຂົ້າຮ່ວມກອງປະຊຸມໄອປາ ຄັ້ງທີ 44 ທີ່ອິນໂດເນເຊຍ




(ສພຊ) ຄະນະຜູ້ແທນຂັ້ນສູງ ສະພາແຫ່ງຊາດ ສປປ ລາວ ນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມໄອປາ ຄັ້ງທີ 44 ທີ່ຈັດຂຶ້ນຢູ່ນະຄອນຫຼວງຈາກາຕາປະເທດອິນໂດເນເຊຍ ແຕ່ວັນທີ 5-11 ສິງຫາ ປີ 2023; ໃນພິທີເປີດກອງປະຊຸມຢ່າງເປັນທາງການທີ່ໄດ້ຈັດຂຶ້ນໃນວັນທີ 7 ສິງຫາ ໂດຍມີພະນະທ່ານ ດຣ. ປວນ ມາຫາຣານີ ປະທານສະພາຜູ້ແທນລາສະດອນແຫ່ງສາທາລະນະລັດອິນໂດເນເຊຍປະທານກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ




ຮອງປະທານ... (ໜ້າ 3)





ສະມາຊິກສະພາ... (ໜ້າ 4)


ເຝົ້າໄວ້ ໄດ້ຂີດຂຽນ
❖ ວິເສດ ສະແຫວງສຶກສາ


ຫຼັກຄ້ຳປະກັນຄວາມປອດໄພ... (ໜ້າ 12)


# ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ສະໄໝທີ XI

(ສພຊ) ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ພາຍໃນສະພາແຫ່ງຊາດ ມີຄວາມຮັບຮູ້ ແລະ ເຂົ້າໃຈກຳໄດ້ເນື້ອໃນມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ສະໄໝທີ XI ຢ່າງທົ່ວເຖິງ ແລະ ເລິກເຊິ່ງ ພ້ອມທັງຜັນຂະຫຍາຍມະຕິດັ່ງກ່າວໃຫ້ເປັນແຜນງານ, ໂຄງການລະອຽດ ໂດຍຕິດພັນກັບວຽກງານຕົວຈິງຂອງສະພາແຫ່ງຊາດ; ເພື່ອສ້າງການຫັນປ່ຽນທາງດ້ານຄວາມຮັບຮູ້, ທັກສະ, ແນວຄິດ



ແລະ ການກະທຳ ແນໃສ່ສົ່ງເສີມດ້ານດີ, ແກ້ໄຂຄວາມບົກຜ່ອງ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ ໃນໄລຍະຜ່ານມາ, ສ້າງຄວາມເຊື່ອໝັ້ນຂອງສະມາຊິກພັກ-ພະນັກງານ ຕໍ່ການນຳພາຂອງພັກ ແລະ ການບໍລິຫານຄຸ້ມຄອງລັດ ທັງເພື່ອເປັນການລະນຶກເຖິງຄຸນງາມຄວາມດີ, ຜົນງານອັນຍິ່ງໃຫຍ່ຂອງປະທານສຸພານຸວົງ ເປັນພື້ນຖານໃນການເສີມສ້າງຄຸນທາດການເມືອງ, ມູນເຊື້ອຄວາມສາມັກຄີຂອງປະຊາຊົນລາວບັນດາເຜົ່າ,

ອ່ານຕໍ່ໜ້າ 3

# ຝຶກອົບຮົມວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

(ສພຊ) ເພື່ອເຮັດໃຫ້ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ການສົ່ງເສີມທັກສະທາງດ້ານວິຊາການ ໃນການເປັນເສນາທິການຊ່ວຍວຽກຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຢ່າງເປັນລະບົບຄົບຊຸດ, ມີປະ



ສິດທິພາບ ແລະ ເປັນເອກະພາບ, ຕອບສະໜອງໃຫ້ໄດ້ຄວາມຮຽກຮ້ອງຕ້ອງການໃນການປະຕິບັດໜ້າທີ່ວຽກງານຕົວຈິງ.

ກອງປະຊຸມຝຶກອົບຮົມວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ເປີດຂຶ້ນໃນລະຫວ່າງວັນທີ 8-10 ສິງຫາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີຄະນະກົມ, ຄະນະພະແນກ, ວິຊາການຂອງບັນດາກຳມາທິການຕ່າງໆ ແລະ ຄະນະເລຂາທິການສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຈາກສະພາປະຊາຊົນຂັ້ນແຂວງ 16 ແຂວງ ແລະ ນະຄອນຫຼວງວຽງຈັນ.

ກອງປະຊຸມຄັ້ງນີ້, ໄດ້

ອ່ານຕໍ່ໜ້າ 2

## ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ແມ່ນໜ້າທີ່ຂອງພົນລະເມືອງທຸກຄົນ

**ເນື່ອງໃນໂອກາດວັນລັດຖະທຳມະນູນ ແຫ່ງ ສປປ ລາວ ຄົບຮອບ 32 ປີ (15/08/1991-15/08/2023)**

**ໂດຍ: ສີວັນ**

ລັດຖະທຳມະນູນ ເປັນກົດໝາຍພື້ນຖານຂອງຊາດ, ທັງເປັນການຫັນແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ທີ່ມີຫຼັກການຂອງພັກປະຊາຊົນ ປະຕິວັດລາວ ມາເປັນກົດໝາຍພື້ນຖານຂອງລະບອບປະຊາທິປະໄຕ ປະຊາຊົນລາວ ເພື່ອສຶກສາອົບຮົມປະຊາຊົນລາວບັນດາເຜົ່າ ໃຫ້ຍົກສູງນ້ຳໃຈຮັກຊາດ, ຮັກລະບອບໃໝ່, ເພີ່ມທະວີຄວາມສາມັກຄີປອງດອງຊົນລາວທັງຊາດ ເຊີດຊູບົດບາດເປັນເຈົ້າການໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມຈຸດໝາຍທີ່ພັກໄດ້ກຳນົດໄວ້.

ການປ່ຽນແປງໃໝ່ຮອບດ້ານ ຢ່າງມີຫຼັກການຂອງພັກເຮົາ ເຊິ່ງຕ້ອງຫັນໄປສູ່ການຄຸ້ມຄອງລັດດ້ວຍລັດຖະທຳມະນູນ ແລະ ດ້ວຍກົດໝາຍ ຢ່າງເປັນເອກະພາບ. ສະນັ້ນ, ກອງປະຊຸມ

ອ່ານຕໍ່ໜ້າ 4

# ຮຽບຮຽງເນື້ອໃນຮ່າງກົດໝາຍ ວ່າດ້ວຍທະນາຄານທຸລະກິດ



(ສພຊ) ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ທີ່ຜ່ານການພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນທີ່ຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານນັ້ນ. ກຳມາທິການກົດໝາຍ ສົມທົບກັບກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ທະນາຄານ ແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມຮຽບຮຽງເນື້ອໃນຂອງຮ່າງກົດໝາຍດັ່ງກ່າວຂຶ້ນເພື່ອຄົ້ນຄວ້າ, ເລືອກເຟັ້ນເອົາບັນດາຄຳຄິດເຫັນ

ອ່ານຕໍ່ໜ້າ 3

# ປາຖະກະຖາວັນສ້າງຕັ້ງອົງການຈັດຕັ້ງ ສະຫະພັນແມ່ຍິງລາວ ຄົບຮອບ 68 ປີ



(ສພຊ) ວັນທີ 2 ສິງຫາ 2023 ທີ່ສະພາແຫ່ງຊາດ ໄດ້ຈັດພິທີປາຖະກະຖາວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ (20 ກໍລະກົດ 1955-20 ກໍລະກົດ 2023) ແລະ ຕີລາຄາການເຄື່ອນໄຫວວຽກງານຂອງສະຫະພັນ

ອ່ານຕໍ່ໜ້າ 3

**ຂໍ່ານັບຊົມເຊີຍວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ (15/08/1991-15/08/2023) ຢ່າງສຸດໃຈ!**

## ປະທານສະພາ...

(ຕໍ່ຈາກໜ້າ 1)




(AIPA) ຄັ້ງທີ 44, ໃຫ້ກຽດເຂົ້າຮ່ວມມີພະນະທ່ານ ໂຈໂກ ວິໂດໂດ້ ປະທານາທິບໍດີ ແຫ່ງສາທາລະນະລັດ ອິນໂດເນເຊຍ. ໃນພິທີເປີດຍັງມີບັນດາຜູ້ແທນຂັ້ນສູງຈາກລັດຖະສະພາປະເທດອາຊຽນ ແລະ ຜູ້ແທນຈາກປະເທດຜູ້ສັງເກດການ ຈຳນວນ 14 ປະເທດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ຢູ່ອິນໂດເນເຊຍຈຳນວນໜຶ່ງ.

ກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 44 ດຳເນີນໄປພາຍໃຕ້ຫົວຂໍ້: ຄວາມຮັບຜິດຊອບຂອງລັດຖະສະພາຕໍ່ສະຖຽນລະພາບ ແລະ ຄວາມສົມບູນພູນສຸກຂອງອາຊຽນ. ໃນກອງປະຊຸມຄັ້ງນີ້, ພາຍຫຼັງພະນະທ່ານປະທານສະພາລາສະດອນ ແຫ່ງ ອິນໂດເນເຊຍ, ປະທານກອງປະຊຸມໄອປາໄດ້ຂຶ້ນກ່າວເປີດກອງປະຊຸມຄັ້ງນີ້ແລ້ວພະນະທ່ານເລຂາທິການໄອປາກໍໄດ້ຂຶ້ນກ່າວຄຳເຫັນໂດຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການຈັດກອງປະຊຸມຄັ້ງນີ້. ຈາກນັ້ນພະນະທ່ານປະທານນາທິບໍດີ ໂຈໂກ ວິໂດໂດ້ ໄດ້ກ່າວຄຳປາໄສຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມດີໃຈທີ່ກອງປະຊຸມຄັ້ງນີ້ມີການປຶກສາຫາລືຫົວຂໍ້ສຳຄັນ ແລະ ອິນໂດເນເຊຍພ້ອມຈະປະກອບສ່ວນ ເພື່ອຄວາມເຂັ້ມແຂງຂອງອາຊຽນ.

ພ້ອມນັ້ນ, ບັນດາຫົວໜ້າຄະນະຜູ້ແທນປະເທດສະມາຊິກໄອປາ ໄດ້ຜັດປ່ຽນກັນຂຶ້ນປະກອບຄຳເຫັນ ໂດຍໄດ້ເນັ້ນໜັກເຖິງບົດບາດອັນສຳຄັນຂອງລັດຖະສະພາໃນການມີສ່ວນຮ່ວມຕໍ່ບັນຫາສະຖຽນລະພາບ ແລະ ຄວາມສົມບູນພູນສຸກ ຂອງປະເທດຕົນເອງກໍຄືໃນຂອບເຂດພາກພື້ນ ແລະ ໃນໂລກ. ປະກອບສ່ວນເຂົ້າໃນການຈັດຕັ້ງຍຸດທະສາດອາຊຽນຮອດປີ 2025 ເພື່ອສ້າງໃຫ້ອາຊຽນມີຄວາມເຂັ້ມແຂງ, ເຊື່ອມຈອດເຊື່ອມໂຍງ, ສ້າງໃຫ້ອາຊຽນເປັນສູນກາງແຫ່ງການເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ ກໍຄືການປັບປຸງຊີວິດການເປັນຢູ່ຂອງປະຊາຊົນອາຊຽນໃຫ້ດີຂຶ້ນເລື້ອຍໆ ໂດຍບໍ່ປະໃຫ້ໃຜຄ້າງຢູ່ເບື້ອງຫຼັງ.

ໃນກອງປະຊຸມອາລະລວມ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຂຶ້ນກ່າວຄຳເຫັນໂດຍໄດ້ຕີລາຄາເຖິງຄວາມສຳຄັນຂອງຫົວຂໍ້ກອງປະຊຸມໄອປາຄັ້ງທີ 44 ເຊິ່ງໄດ້ເນັ້ນໜັກເຖິງບົດບາດອັນສຳຄັນຂອງລັດຖະສະພາໃນການຊຸກຍູ້ໃນການຈັດຕັ້ງປະຕິບັດຍຸດທະສາດຂອງອາຊຽນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາປະເທດອາຊຽນ, ໄດ້ຕີລາຄາສະພາບພາກພື້ນ ແລະ ສາກົນ ທີ່ພວມມີການຜັນແປຢ່າງວ່ອງໄວ, ສະຫຼັບຊັບຊ້ອນ, ຄາດເດົາໄດ້ຍາກ ເປັນຕົ້ນແມ່ນການປ່ຽນແປງດ້ານດິນຟ້າອາກາດ, ການຕໍ່ສູ້ດ້ອຍອາວຸດ, ອາຊະຍາກຳຂ້າມຊາດ, ບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດການເງິນ, ໄພເງິນເຟີ້, ການເພີ່ມຂຶ້ນຂອງລາຄາສະບຽງອາຫານ, ພະລັງງານເຊື້ອໄຟ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະແມ່ນປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ ລວມທັງ ສປປ ລາວ ເຮົາ, ເຊິ່ງເປັນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງກໍຄືການບັນລຸເປົ້າໝາຍສ້າງປະຊາຄົມອາຊຽນໃນປີ 2025 ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດໃນປີ 2030.

ໃນສະພາບການຄືດັ່ງກ່າວ, ທ່ານປະທານສະພາແຫ່ງຊາດລາວ ໄດ້ສະເໜີໃຫ້ໄອປາຈົ່ງໄດ້ເພີ່ມທະວີຄວາມຮັບຜິດຊອບຂອງຕົນໃນການສົ່ງເສີມການສ້າງຄວາມເຂັ້ມແຂງໃນອາຊຽນ ເຊິ່ງຈະເປັນການປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ສະຖຽນລະພາບມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ, ສົ່ງເສີມການແກ້ໄຂບັນຫາຂໍ້ຂັດແຍ່ງໂດຍສັນຕິວິທີ, ຮັບປະກັນໃຫ້ມີຄວາມໝັ້ນຄົງທາງນ້ຳ, ດ້ານພະລັງງານ, ສະບຽງອາຫານ....

ຕອນທ້າຍຂອງການກ່າວຄຳເຫັນ, ທ່ານປະທານສະພາແຫ່ງຊາດລາວ ໄດ້ແຈ້ງໃຫ້ກອງປະຊຸມຊາບວ່າ ສປປ ລາວ ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາລັດຖະສະພາແຫ່ງຊາດອາຊຽນ (ໄອປາ) ຄັ້ງທີ 45 ພາຍໃຕ້ຫົວຂໍ້: ບົດບາດຂອງລັດຖະສະພາໃນການສົ່ງເສີມການເຊື່ອມໂຍງ, ເຊື່ອມຈອດ ແລະ ການພັດທະນາແບບກວມລວມຂອງອາຊຽນ ແລະ ໄດ້ສະແດງຄວາມເຊື່ອໝັ້ນວ່າບັນດາປະເທດສະມາຊິກໄອປາຈະໃຫ້ການສະໜັບສະໜູນ ສປປ ລາວ ໃນການປະຕິບັດພັນທະດັ່ງກ່າວດ້ວຍຄວາມສຳເລັດ.

ຈາກນັ້ນ, ບັນດາທ່ານຜູ້ຕາງໜ້າຂອງປະເທດສັງເກດການ ແລະ ອົງການຈັດຕັ້ງສາກົນທີ່ປະຈຳຢູ່ອິນໂດເນເຊຍຈຳນວນໜຶ່ງໄດ້ກ່າວຄຳເຫັນໂດຍໄດ້ສະແດງເຈດຈຳນົງໃນການຮ່ວມມືກັບອາຊຽນໃຫ້ຫຼາຍຂຶ້ນໃນຂົງເຂດທີ່ປະເທດຕົນເອງມີທ່າແຮງ.

ກອງປະຊຸມໄອປາດຳເນີນຕາມຫົວຂໍ້: ຮ່ວມມືດ້ານການເມືອງ, ດ້ານວຽກງານເພດຍິງ (ໄວປາ), ດ້ານວຽກງານຊາວໜຸ່ມ, ດ້ານວຽກງານວັດທະນະທຳສັງຄົມ ແລະ ວຽກງານການຈັດຕັ້ງພາຍໃນປະເທດສະມາຊິກໄອປາ.

ນອກຈາກເຂົ້າຮ່ວມກອງປະຊຸມຫຼາຍຝ່າຍແລ້ວຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດລາວ ຍັງໄດ້ມີການພົບປະສອງຝ່າຍກັບປະເທດເຈົ້າພາບອິນໂດເນເຊຍ, ຄະນະຜູ້ແທນສະພາແຫ່ງຊາດຫວຽດນາມ, ກຳປູເຈຍ, ໄທ, ສປ ຈີນ ແລະ ບາງປະເທດສັງເກດການຈຳນວນໜຶ່ງ. ໃນພິທີປິດກອງປະຊຸມໃນວັນທີ 9 ສິງຫາ 2023 ທ່ານ ປະທານສະພາແຫ່ງຊາດ ສປປ ລາວ ຍັງໄດ້ມີການກ່າວຄຳເຫັນ ກ່າວຮັບການເປັນເຈົ້າພາບກອງປະຊຸມໄອປາ ຄັ້ງທີ 45 ໃນປີ 2024 ທີ່ຈະມາເຖິງນີ້.

## ຝຶກອົບຮົມ...

(ຕໍ່ຈາກໜ້າ 1)



ຮັບຟັງການສະເໜີບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດເສດຖະກິດ-ການເງິນ ແລະ ຂົງເຂດຍຸຕິທຳ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ; ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ພ້ອມນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ປະກອບຄຳຄິດຄຳເຫັນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ໃນການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງໃນໄລຍະຜ່ານມາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າມີຄວາມສະດວກ ແລະ ມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນໂດຍໂຄງການສ້າງຄວາມເຂັ້ມແຂງ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ນາງ ປາກາລັກ ພົມມີໄຊ)**

## ເລື່ອງເດັ່ນ ຂ່າວເດັດ

*# ຄັດໂດຍ: ທອມສະນິດ*

❐ ປັດຈຸບັນ, ສປປ ລາວ ກຳລັງຢູ່ໃນໄລຍະຂອງການປ່ຽນແປງດ້ານປະຊາກອນ ເຊິ່ງການປັບປຸງທາງດ້ານສາທາລະນະສຸກທີ່ກວມເອົາວຽກງານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ຈະຊ່ວຍຫຼຸດອັດຕາການເສຍຊີວິດ ແລະ ການເກີດ, ສົ່ງຜົນໃຫ້ມີການປ່ຽນແປງດ້ານໂຄງສ້າງປະຊາກອນ ຕາມກຸ່ມອາຍຸຢ່າງໄວວາ. ທ່າອ່ຽງຂອງຫຼາຍໂຕຊີ້ວັດທີ່ສຳຄັນມີທິດທາງທີ່ດີຂຶ້ນ ໂດຍສະເພາະອັດຕາການໃຊ້ຖົງກຳເນີດເປັນຕົ້ນ; ອີງໃສ່ການສຳຫຼວດດັດຊະນີໝາຍສັງຄົມລາວ, ການຊົມໃຊ້ວິທີການວາງແຜນຄອບຄົວແບບທັນສະໄໝໃນກຸ່ມແມ່ຍິງ 15-49 ປີທີ່ແຕ່ງງານ ຫຼື ຢູ່ຮ່ວມກັນແມ່ນເພີ່ມຂຶ້ນ ຈາກ 42% ໃນປີ 2012 ມາເປັນ 49% ໃນປີ 2017. ອັດຕາເກີດລູກໃນໄວໜຸ່ມຍິງຫຼຸດລົງຈາກ 94 ຕໍ່ແມ່ຍິງ 1.000 ຄົນ ໃນປີ 2012 ມາເປັນ 83 ຕໍ່ 1.000 ຄົນ ໃນປີ 2017. ດັ່ງນັ້ນ, ສປປ ລາວ ຈຶ່ງໄດ້ຮັບຜົນປະໂຫຍດຈາກປະຊາກອນໜຸ່ມ ເຊິ່ງເປັນທ່າແຮງ ແລະ ຊ່ອງທາງສຳລັບກາລະໂອກາດ ເຮັດໃຫ້ເກີດການປັນຜົນດ້ານປະຊາກອນ ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດຫາກມີການລົງທຶນຢ່າງພຽງພໍ ແລະ ມີຍຸດທະສາດໃນການພັດທະນາທຶນມະນຸດ.

**ໜສພ. ປະເທດລາວ 04/08/2023**

❐ ສປປ ລາວ ໄດ້ລົງນາມໃນສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ໃນວັນທີ 18 ມີນາ 2009 ເປັນປະເທດທີ 2 ຖັດຈາກປະເທດນໍເວ ແລະ ໄດ້ໃຫ້ສັດຕະຍາບັນ ວັນທີ 16 ກຸມພາ 2010 ມີຜົນບັງຄັບໃຊ້ວັນທີ 1 ສິງຫາ 2010 ໃນກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຄັ້ງທີ 9 ປີ 2019 ກອງປະຊຸມໄດ້ຮັບຮອງໃຫ້ລັດຖະບານລາວຕໍ່ອາຍຸສັນຍາຂອງລາວໄປຕື່ມອີກ 5 ປີ (2020-2025) ເພື່ອສືບຕໍ່ປະຕິບັດພັນທະ ແລະ ໃຫ້ບັນລຸມາດຕາ 4 ການເກັບກູ້ ແລະ ທຳລາຍເສດລະເບີດລູກຫວ່ານທີ່ຕົກຄ້າງ ແລະ ການໂຄສະນາສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ.

**ໜສພ. ວຽງຈັນໃໝ່ 04/08/2023**

❐ ເລີ່ມແຕ່ຕົ້ນເດືອນສິງຫາ 2023 ໄດ້ມີຝົນຕົກແຮງທົ່ວປະເທດ ເຮັດໃຫ້ແມ່ນ້ຳຫຼາຍສາຍສູງຂຶ້ນເກີດມີນ້ຳປ່າໄຫຼຫຼາກ, ດິນເຊາະເຈື່ອນຢູ່ຫຼາຍແຂວງໃນເຂດພາກເໜືອ ແລະ ພາກກາງ ໂດຍສະເພາະແມ່ນຢູ່ແຂວງຜົ້ງສາລີ, ຫົວພັນ, ຫຼວງພະບາງ, ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ແລະ ແຂວງໄຊສົມບູນ ເຊິ່ງມີປະຊາຊົນຫຼາຍເມືອງ ແລະ ຫຼາຍຄອບຄົວໄດ້ຮັບຜົນກະທົບ ເຮັດໃຫ້ທີ່ຢູ່ອາໄສ, ເນື້ອທີ່ທຳການຜະລິດ, ພື້ນຖານໂຄງລ່າງ, ຖະໜົນຫົນທາງ, ສັດລ້ຽງ ແລະ ຊັບສິນຈຳນວນຫຼາຍສູນຫາຍໄປກັບນ້ຳ.

**ໜສພ. ປະເທດລາວ 07/08/2023**

# ຮອງປະທານ ກວທສ ຕ້ອນຮັບທູດພິເສດດ້ານຄວາມສະເໝີພາບຍິງ-ຊາຍ



(ສພຊ) ວັນທີ 8 ສິງຫາ 2023, ທີ່ສະພາແຫ່ງຊາດທ່ານ ນາງ ມະນີວັນ ເຍຍປາວເຣີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ສະພາແຫ່ງຊາດ ໄດ້ຕ້ອນຮັບທ່ານ ນາງ ສະເຕຟານນີ ເຈນ ໂຄປາສ ເຄມເບວ ທູດພິເສດດ້ານຄວາມສະເໝີພາບຍິງ-ຊາຍ ພ້ອມດ້ວຍຄະນະ; ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ. ການຢ້ຽມຢາມຄັ້ງນີ້ ເພື່ອເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ອິດສະຕຣາລີ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ, ພ້ອມທັງເປັນການປຶກສາຫາລື ແລະ ແລກປ່ຽນບົດຮຽນກ່ຽວກັບປະສົບການໃນການສົ່ງເສີມບົດບາດຍິງ-ຊາຍ.

ໂອກາດນີ້, ທ່ານ ນາງ ມະນີວັນ ເຍຍປາວເຣີ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານ ນາງ ສະເຕຟານນີ ເຈນ ໂຄປາສ ເຄມເບວ ທູດພິເສດດ້ານຄວາມສະເໝີພາບຍິງ-ຊາຍ ອິດສະຕຣາລີ ພ້ອມດ້ວຍຄະນະ ໃນໂອກາດທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້; ໃນນາມຮອງປະທານ ກວທສ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມໃນຄັ້ງນີ້ຂອງທ່ານ ນາງ ສະເຕຟານນີ ເຈນ ໂຄປາສ ເຄມເບວ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມາແຕ່ດົນນານ ລະຫວ່າງ ສປປ ລາວ ແລະ ອິດສະຕຣາລີ ເວົ້າລວມ, ເວົ້າສະເພາະແມ່ນການພົວພັນ ລະຫວ່າງລັດຖະສະພາ ລາວ ແລະ ອິດສະຕຣາລີ, ໄດ້ປຶກສາຫາລື ແລະ ແລກປ່ຽນບົດຮຽນຮ່ວມກັນກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ. ພ້ອມນີ້, ທ່ານຍັງໄດ້ອວຍພອນໃຫ້ທ່ານທູດພິເສດດ້ານຄວາມສະເໝີພາບຍິງ-ຊາຍ ອິດສະຕຣາລີ ພ້ອມດ້ວຍຄະນະ ທີ່ມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ, ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດສະຫງ່າຂອງຕົນ ແລະ ເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບ.

ໃນຕອນທ້າຍ, ທ່ານ ນາງ ສະເຕຟານນີ ເຈນ ໂຄປາສ ເຄມເບວ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານກວທສ ພ້ອມດ້ວຍຄະນະ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ເສຍສະຫຼະເວລາອັນມີຄ່າໃຫ້ການຕ້ອນຮັບໃນຄັ້ງນີ້ພ້ອມທັງແຈ້ງຈຸດປະສົງໃນການພົບປະຢ້ຽມຢາມໃນຄັ້ງນີ້ ແລະ ເຫັນດີທີ່ຈະນຳເອົາຂໍ້ສະເໜີຕ່າງໆ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ ເພື່ອໃຫ້ວຽກງານດັ່ງກ່າວເປັນຮູບປະທຳຍິ່ງໆຂຶ້ນ.

**(ພາບ ກຸກກິກ ບຸດດາໄຊ
ຂ່າວ: ໄຊໂສພາພອນ ມິ່ງມຸງຄຸນ)**



## ເຊື່ອມຊຶມ...

(ຕໍ່ຈາກໜ້າ 1)

ປຸກລະດົມນໍ້າໃຈຮັກຊາດ, ຮັກລະບອບໃໝ່, ເປັນເຈົ້າຕົນເອງ, ເຊີດຊູບົດບາດການນຳພາຂອງພັກ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ໃນວັນທີ 2 ສິງຫາ 2023 ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ໄດ້ມີກອງປະຊຸມເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ສະໄໝທີ XI, ເອກະສານສຳຄັນຕ່າງໆຂອງອົງຄະນະພັກສະພາແຫ່ງຊາດ ແລະ ປາຖະກະຖາວັນຄ້າຍວັນເກີດປະທານສຸພານຸວົງ ຄົບຮອບ 114 ປີ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນທັງໝົດທົ່ວສະພາແຫ່ງຊາດ.

ກອງປະຊຸມ ໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານການສູນກາງພັກ ຄັ້ງທີ 6 ສະໄໝທີ XI ຈາກສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ການເຜີຍແຜ່ບົດສະຫຼຸບກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ ຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ຈາກສະຫາຍ ສຈ. ປອ. ຈະເລີນ ເຍຍປາວເຣີ ກຳມະການສູນກາງພັກ, ກຳມະການປະຈຳພັກສະພາແຫ່ງຊາດ; ຈາກນັ້ນ, ໄດ້ຮັບຟັງການປາຖະກະຖາເລົ່າມູນເຊື້ອວັນຄ້າຍວັນເກີດຂອງປະທານ ສຸພານຸວົງ ຄົບຮອບ 114 ປີ ຈາກສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ກຳມະການປະຈຳພັກ, ປະທານຄະນະກວດກາພັກສະພາແຫ່ງຊາດ.

ພ້ອມດຽວກັນນັ້ນ, ຍັງໄດ້ຮັບຟັງການຜ່ານຂໍ້ຕົກລົງຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ວ່າດ້ວຍການຮັບຮອງການອອກບັດສະມາຊິກພັກຂອງອົງຄະນະພັກສະພາແຫ່ງຊາດ ຈຳນວນ 38 ສະຫາຍ ຍິງ 19 ສະຫາຍ ແລະ ໄດ້ມີພິທີມອບ-ຮັບບັດສະມາຊິກພັກໃຫ້ບັນດາສະຫາຍທີ່ມີລາຍຊື່ຕາມຂໍ້ຕົກລົງສະບັບດັ່ງກ່າວ.

**(ສຸພາວັນ ທອມສະນິດ)**



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຂອງສະມາຊິກສະພາແຫ່ງຊາດທີ່ມີເຫດຜົນ ເພື່ອມາປັບປຸງໃສ່ຮ່າງກົດໝາຍ. ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໃນວັນທີ 2 ສິງຫາ 2023 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມມີປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ບັນດາທ່ານຮອງປະທານກຳມາທິການ, ສະມາຊິກສະພາແຫ່ງຊາດ, ທີ່ປຶກສາທາງດ້ານກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ທ່ານ ຄຳຄ່ອງ ສີຫາປັນຍາ ຫົວໜ້າກົມກົດໝາຍ ສະພາແຫ່ງຊາດ ໄດ້ສະເໜີບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດທີ່ໄດ້ມີຄຳເຫັນຕໍ່ກົດໝາຍສະບັບດັ່ງກ່າວໃນບາງມາດຕາ; ຈາກນັ້ນ, ບັນດາຜູ້ເຂົ້າກອງປະຊຸມໄດ້ສຸມສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ກົດໝາຍສະບັບດັ່ງກ່າວເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນຂຶ້ນກວ່າເກົ່າ.

## ປາຖະກະຖາ...

(ຕໍ່ຈາກໜ້າ 1)

ແມ່ຍິງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ໂດຍການເປັນປະທານຮ່ວມຂອງສະຫາຍ ດຣ. ນາງ ອິນລາວັນ ແກ້ວບຸນພັນ ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ແລະ ສະຫາຍ ນາງ ມະນີວັນ ເຍຍປາວເຣີ ປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ; ເຂົ້າຮ່ວມມີສະຫາຍ ຮສ. ປອ. ລິນຄຳ ດວງສະຫວັນ ຄະນະປະຈຳພັກສະພາແຫ່ງຊາດ ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ; ມີຕາງໜ້າຈາກ 3 ອົງການຈັດຕັ້ງ ແລະ ຄອບຄົວການນຳ ພ້ອມດ້ວຍສະມາຊິກແມ່ຍິງສະພາແຫ່ງຊາດເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ເພື່ອເປັນການສ້າງປູກຈິດສຳນຶກໃຫ້ເອື້ອຍນ້ອງແມ່ຍິງສະພາແຫ່ງຊາດ ໄດ້ຮັບຮູ້, ເຂົ້າໃຈ ແລະ ເຫັນໄດ້ຄຸນງາມຄວາມດີຂອງແມ່ຍິງລາວໃນການປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ການປົກປັກຮັກສາ ແລະ ການພັດທະນາປະເທດ ພ້ອມທັງເປັນການທວນຄືນມູນເຊື້ອປະຫວັດຄວາມເປັນມາຂອງວັນສ້າງຕັ້ງສະຫະພັນແມ່ຍິງລາວ 20 ກໍລະກົດ ຄົບຮອບ 68 ປີ ທັງເພື່ອປຸກລະດົມສະມາຊິກແມ່ຍິງສະພາແຫ່ງຊາດເປັນເຈົ້າການໃນການປະຕິບັດວິໄສທັດພັດທະນາແມ່ຍິງລາວ ຮອດປີ 2030, ແຜນຍຸດທະສາດພັດທະນາແມ່ຍິງລາວຮອດປີ 2025, ແຜນພັດທະນາແມ່ຍິງແຫ່ງຊາດ 5 ປີ (2021-2025) ເພື່ອປະກອບສ່ວນໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການປາຖະກະຖາມູນເຊື້ອວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ 20 ກໍລະກົດ ຄົບຮອບ 68 ປີ ຈາກສະຫາຍ ດຣ. ນາງ ອິນລາວັນ ແກ້ວບຸນພັນ; ການສະເໜີຮ່າງບົດສະຫຼຸບ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຈາກສະຫາຍ ນາງ ດາວເພັດ ສີຫາວົງ ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ; ຈາກນັ້ນ, ສະມາຊິກແມ່ຍິງສະພາແຫ່ງຊາດ ໄດ້ພ້ອມກັນປະກອບຄຳເຫັນຕໍ່ບົດສະຫຼຸບດັ່ງກ່າວ ແລະ ໃນຕອນທ້າຍຂອງກອງປະຊຸມ ຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍ ຮສ. ປອ. ລິນຄຳ ດວງສະຫວັນ ຕື່ມອີກ.

**(ນາງ ນິດຕາ ຄຸນປາກດີ)**



## ການຈັດຕັ້ງ...

(ຕໍ່ຈາກໜ້າ 1)

ສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II (ປີ 1991) ຈຶ່ງໄດ້ພິຈາລະນາຮັບຮອງເອົາລັດຖະທຳມະນູນ ສະບັບທຳອິດ ຂອງ ສປປ ລາວ ແລະ ປະກາດໃຊ້ໃນວັນທີ 15/08/1991.

ພາຍຫຼັງປະເທດຊາດໄດ້ຮັບການສະຖາປະນາເປັນ ສປປ ລາວ, ພັກ ໄດ້ວາງແນວທາງ ແລະ ນຳພາປະຊາຊົນປະຕິບັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ປີ 1986 ພັກ ໄດ້ວາງແນວທາງປ່ຽນແປງໃໝ່ຮອບດ້ານ ໂດຍເລີ່ມຈາກການປ່ຽນແປງທາງດ້ານເສດຖະກິດ, ຫັນຈາກການຄຸ້ມຄອງລວມສູນບໍລິຫານເກືອບ ໄປສູ່ການຄຸ້ມຄອງຕາມກົນໄກຕະຫຼາດ ທີ່ມີການໄລ່ລຽງເສດຖະກິດ ແລະ ມີການດັດສົມຂອງລັດ.

ການປະກາດໃຊ້ລັດຖະທຳມະນູນ ເປັນເຫດການການເມືອງທີ່ສຳຄັນຂອງຊາດ, ທັງເປັນຂີດໝາຍໃໝ່ແຫ່ງການຫັນໄປສູ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ສ້າງລັດແຫ່ງກົດໝາຍເທື່ອລະກ້າວ. ທັງນີ້ ໄດ້ສ່ອງແສງໃຫ້ເຫັນເຖິງລັກສະນະທາດແທ້ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງລະບອບປະຊາທິປະໄຕປະຊາຊົນລາວ ພາຍໃຕ້ການນຳພາອັນຖືກຕ້ອງຂອງພັກ ປປ ລາວ ເຊິ່ງໄດ້ຢັ້ງຢືນໃຫ້ຊາວໂລກຮັບຮູ້, ເຂົ້າໃຈ ກ່ຽວກັບຄວາມເປັນເອກະລາດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ.

ລັດຖະທຳມະນູນ ແຫ່ງ ສປປ ລາວ ໃນດ້ານທາດແທ້ ແມ່ນການສ້າງສະຕິຊາດເອກະພາບອັນໜຶ່ງອັນດຽວກັນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ຮັບຮູ້ ແລະ ປົກປ້ອງການດຳລົງຄົງຕົວທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້ຂອງປະຊາຊົນບັນດາເຜົ່າ, ເປັນພາຫະນະທີ່ສຳຄັນ ເພື່ອສຶກສາອົບຮົມປະຊາຊົນ ໃນການຍົກສູງນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ເປັນການເພີ່ມທະວີຄວາມສາມັກຄີປອງດອງທົ່ວປວງຊົນທັງຊາດ. ເຊີດຊູບົດບາດ ແລະ ຄວາມສາມາດເປັນເຈົ້າປະເທດຊາດຂອງປະຊາຊົນບັນດາເຜົ່າ ເພື່ອພ້ອມກັນສຸມທຸກກຳລັງເຫື່ອແຮງ, ສະຕິປັນຍາ ແລະ ຄວາມສາມາດຂອງຕົນ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມແນວທາງການປ່ຽນແປງໃໝ່ ແນໃສ່ເຮັດໃຫ້ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ລັດຖະທຳມະນູນ ແຫ່ງ ສປປ ລາວ ໄດ້ກຳນົດແຈ້ງລະບອບການເມືອງ, ລະບອບເສດຖະກິດ-ສັງຄົມ, ລະບົບການຈັດຕັ້ງກົງຈັກລັດ ປະຊາທິປະໄຕ ປະຊາຊົນ ໃນໄລຍະໃໝ່. ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງລາວ, ພາສາ, ຕົວອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງ.

ການສ້າງຕັ້ງລັດຖະທຳມະນູນ ແລະ ກົດໝາຍ ເພື່ອຄຸ້ມຄອງຂົງເຂດຕ່າງໆຂອງຊີວິດສັງຄົມ ແນໃສ່ເຮັດໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ແລະ ສ້າງສິ່ງອຳນວຍໃຫ້ເສດຖະກິດຂະຫຍາຍຕົວ ໄປຕາມເສັ້ນທາງສັງຄົມນິຍົມທີ່ພັກເຮົາ ໄດ້ກຳນົດໄວ້ຢ່າງຈະແຈ້ງ.

ຕະຫຼອດໄລຍະຜ່ານມາ, ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ແມ່ນສາມາດຫັນລັດຖະທຳມະນູນເປັນກົດໝາຍໄດ້ 150 ກວ່າສະບັບ, ນິຕິກຳລຸ່ມກົດໝາຍ (ລັດຖະບັນຍັດ ແລະ ດຳລັດ) ໄດ້ຫຼາຍຮ້ອຍສະບັບ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ນັບມື້ເປັນລະບົບຄົບຊຸດ ເທື່ອລະກ້າວ. ພ້ອມກັນນັ້ນ, ກໍເປັນພື້ນຖານຄໍ້າປະກັນໃຫ້ແກ່ການປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ໄດ້ເອົາໃຈໃສ່ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ເຮັດໃຫ້ການຈັດຕັ້ງໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນລາວ ແລະ ປະຊາຊົນລາວບັນດາເຜົ່າ ມີບ່ອນອີງໃນການເຄື່ອນໄຫວທຳການຜະລິດ, ດຳເນີນທຸລະກິດ ແລະ ທຳມາຫາກິນ ຕາມລະບຽບກົດໝາຍຫຼາຍຂຶ້ນ, ເຮັດໃຫ້ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ.

ເພື່ອເພີ່ມທະວີການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ເຂັ້ມງວດ ແລະ ມີປະສິດທິຜົນສູງຂຶ້ນກວ່າເກົ່າ ເຊິ່ງຕ້ອງໄດ້ເອົາໃຈໃສ່ເພີ່ມທະວີການໂຄສະນາສຶກສາອົບຮົມໃຫ້ພົນລະເມືອງລາວທຸກຄົນ ຮັບຮູ້, ເຊື່ອມຊຶມ ແລະ ກຳແໜ້ນກ່ຽວກັບລັດຖະທຳມະນູນ ແລະ ກົດໝາຍຕ່າງໆ ດ້ວຍຫຼາຍຮູບການ, ຫຼາຍລະດັບທີ່ເໝາະສົມ. ພ້ອມກັນນັ້ນ, ກໍຕ້ອງສ້າງເງື່ອນໄຂໃຫ້ເຂົາເຈົ້າປະຕິບັດກົດໝາຍຢ່າງເຂັ້ມງວດ, ຮູ້ນຳໃຊ້ກົດໝາຍ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳ ແລະ ປະຕິບັດພັນທະຂອງຕົນຢ່າງຖືກຕ້ອງ. ສຶກສາອົບຮົມໃຫ້ທຸກຄົນກ້າວເຂົ້າສູ່ແບບແຜນການດຳລົງຊີວິດແລະເຮັດວຽກງານຕາມກົດໝາຍທີ່ວາງອອກ, ເອົາໃຈໃສ່ຄົ້ນຄວ້າເພື່ອຫັນເນື້ອໃນລັດຖະທຳມະນູນອອກເປັນກົດໝາຍ ໃນຂົງເຂດຕ່າງໆຂອງຊີວິດສັງຄົມ ເພື່ອເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍໃຫ້ຫຼາຍຂຶ້ນກວ່າເກົ່າ. ສະນັ້ນ, ການສ້າງກົດໝາຍໃໝ່ຕ້ອງຕິດພັນຢ່າງສະໜິດແໜ້ນກັບການກວດກາຄືນ ແລະ ການປັບປຸງບັນດາກົດໝາຍ ທີ່ປະກາດໃຊ້ແລ້ວ ນັບທັງລັດຖະທຳມະນູນ ເພື່ອໃຫ້ສອດຄ່ອງກັບສະພາບການໃນໄລຍະໃໝ່.

ໂອກາດວັນແຫ່ງມີຄວາມໝາຍນີ້, ທົ່ວປວງຊົນລາວບັນດາເຜົ່າ ຈົ່ງພ້ອມກັນເພີ່ມທະວີນໍ້າໃຈຮັກຊາດ, ສ້າງຄວາມສາມັກຄີເປັນເອກະພາບ, ນໍ້າໃຈເປັນເຈົ້າຕົນເອງ ເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ບຸກບືນຜ່ານຜ່າຄວາມຫຍຸ້ງຍາກ, ຕັ້ງໜ້າປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດທິດທາງ, ຈຸດໝາຍຂອງພັກ, ຕັ້ງໜ້າຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ໃຫ້ປາກົດຜົນເປັນຈິງ. ພ້ອມກັນປະຕິບັດລັດຖະທຳມະນູນ ແລະ ລະບຽບກົດໝາຍ ໃຫ້ເຂັ້ມງວດ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບ, ປອດໄພ ແລະ ຍຸຕິທຳ ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໃຫ້ກ້າວຂຶ້ນທຽບເທົ່າກັບສາກົນຢ່າງບໍ່ຢຸດຢັ້ງ.

# ສະມາຊິກສະພາປະຊາຊົນ 3 ແຂວງພາກໃຕ້ ໄດ້ຮັບການຍົກສູງຂີດຄວາມສາມາດດ້ານທັກສະ







(ສພຊ) ເພື່ອຍົກລະດັບຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແນໃສ່ເຮັດໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິຜົນ ທັງເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບບາງທັກສະທີ່ມີຄວາມຈຳເປັນໃນການປະຕິບັດວຽກງານຕົວຈິງໃຫ້ມີຜົນສຳເລັດດີຂຶ້ນ, ເພື່ອແລກປ່ຽນ, ສົນທະນາກ່ຽວກັບບາງບົດຮຽນລະຫວ່າງວິທະຍາກອນ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການດ້ວຍກັນ ແນໃສ່ການຍົກລະດັບຄວາມຮັບຮູ້ ແລະ ຄວາມສາມາດໃນການປະຕິບັດໜ້າທີ່ການເມືອງໃຫ້ມີປະສິດທິຜົນດີຂຶ້ນ ໃນລະຫວ່າງວັນທີ 10-11 ສິງຫາ 2023 ທີ່ສະພາປະຊາຊົນແຂວງອັດຕະປື ໄດ້ມີກອງປະຊຸມການຍົກສູງຂີດຄວາມສາມາດດ້ານທັກສະການຕິດຕາມກວດກາ, ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານ, ການຊັກຖາມ ແລະ ການປະກອບຄຳເຫັນ, ການລົງພົບປະຜູ້ມີສິດເລືອກຕັ້ງ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ມີຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ສະມາຊິກສະພາປະຊາຊົນຂັ້ນແຂວງ 3 ແຂວງ ຄື: ຈຳປາສັກ, ເຊກອງ ແລະ ອັດຕະປື; ນັກວິທະຍາກອນຮັບເຊີນຈາກສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ; ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນດ້ານງົບປະມານ ສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ ແລະ ງົບປະມານຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ.

ກອງປະຊຸມ ໄດ້ຮັບຟັງການສະເໜີຫົວຂໍ້ທັກສະການພົບປະປະຊາຊົນ ຂອງສະມາຊິກສະພາປະຊາຊົນແຂວງ ສະເໜີໂດຍທ່ານ ນາງ ບົວວັນ ທຳມະວົງ ຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ; ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ສະເໜີໂດຍທ່ານ ສາຍທອງ ພົມມະວົງ ຫົວໜ້າກົມແຜນການ, ການເງິນ ແລະ ການກວດສອບ; ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ທັກສະການຊັກຖາມ, ການປະກອບຄຳເຫັນ ສະເໜີໂດຍທ່ານ ຄຳສິງ ໄຊສົມແພງຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນກັບນັກວິທະຍາກອນຢ່າງກົງໄປກົງມາ.

ໃນພິທີ, ທ່ານ ສິນທະລາ ຫຼ້າສຸກສະໄໝ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ກ່າວເປີດກອງປະຊຸມວ່າ: ຄະນະປະຈຳສະພາແຫ່ງຊາດ ເວລາໃດກໍໄດ້ຖືເປັນສຳຄັນວຽກງານຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວິຊາການທີ່ເປັນເສນາທິການໃຫ້ສະພາ ໂດຍມີການແຕ່ງຕັ້ງຄະນະຮັບຜິດຊອບ, ສ້າງແຜນດຳເນີນງານໃນແຕ່ລະໄລຍະ, ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດ ແລະ ອຳນວຍຄວາມສະດວກໃຫ້ວຽກງານດັ່ງກ່າວ ໃຫ້ໄດ້ຈັດຕັ້ງເຄື່ອນໄຫວ ແນໃສ່ຮັບປະກັນໃຫ້ແກ່ການປະຕິບັດພາລະບົດບາດຂອງສະມາຊິກສະພາໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າໃຫ້ໄດ້ຮັບການພັດທະນາດ້ານປະລິມານ ແລະ ຄຸນນະພາບ, ກອງປະຊຸມຄັ້ງນີ້ກໍແມ່ນການສືບຕໍ່ຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ແລະ ແຜນການປະຈຳປີ 2023 ຂອງວຽກງານຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ດັ່ງນັ້ນ, ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຝຶກອົບຮົມຄັ້ງນີ້ ຈົ່ງພ້ອມກັນສຸມສະຕິປັນຍາ ແລະ ນຳໃຊ້ເວລາອັນມີຄຸນຄ່າເຂົ້າໃນການຟັງ, ການສົນທະນາ ແລະ ແລກປ່ຽນບົດຮຽນນຳກັນໃຫ້ເລິກເຊິ່ງ, ສາມາດນຳເອົາບົດຮຽນໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການປະຕິບັດພາລະບົດບາດຂອງຕົນໃຫ້ດີຂຶ້ນ.

**(ສຸພາວັນ ທອມສະນິດ)**



# ຫາລືວຽກງານປະເມີນຄວາມໄວ້ວາງໃຈບຸກຄະລາກອນ ສະພາປະຊາຊົນແຂວງເລືອກຕັ້ງ ຮັບຮອງເອົາການແຕ່ງຕັ້ງ

(ສພຊ) ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດກອງປະຊຸມປຶກສາຫາລືວຽກງານປະເມີນບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ, ຮັບຮອງເອົາການແຕ່ງຕັ້ງ ເມື່ອວັນທີ 28 ກໍລະກົດ 2023 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ກິ່ງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານສະມະຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ບັນດາທ່ານຈາກພະແນກທີ່ກ່ຽວຂ້ອງຂອງແຂວງຄື: ສະຫະພັນນັກຮົບເກົ່າ, ແນວລາວສ້າງຊາດ, ພະແນກພາຍໃນ, ຈັດຕັ້ງ ແລະ ກວດກາ, ມີປະທານ-ຮອງປະທານຄະນະ



ກຳມະການການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນວາລະປະຊຸມ ໄດ້ຮັບຟັງການຜ່ານຂໍ້ຕົກລົງເລກທີ 79/ຄຊມ, ລົງວັນທີ 21 ກໍລະກົດ 2023 ຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ກອງເລຂາຮັບຜິດຊອບການປະເມີນຄວາມໄວ້ວາງໃຈ, ມະຕິເລກທີ 60/ຄປຈຂ, ລົງວັນທີ 23 ກໍລະກົດ 2023 ໃນນີ້, ມີຄະນະຮັບຜິດຊອບຈຳນວນ 17 ທ່ານ ແລະ ກອງເລຂາມີຈຳນວນ 9 ທ່ານ ພ້ອມທັງໄດ້ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ເພື່ອກະກຽມຄວາມພ້ອມໃຫ້ແກ່ການດຳເນີນການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງຈະເລືອກຕັ້ງ, ຮັບຮອງເອົາການແຕ່ງຕັ້ງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງໃນຕໍ່ໜ້ານີ້ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ.

**(ອາເມີງ ວິແຄລູ)**

# ຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ ສະຫຼຸບວຽກງານ 6 ເດືອນຕົ້ນປີ



(ສພຊ) ຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ເມື່ອເດືອນກໍລະກົດຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ຄຳຟອງ ກົ້ວມີໄຊ ກຳມະການຄະນະປະຈຳ, ເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານນາງ ນິດພອງສີ ວັນນະວົງ ຫົວໜ້າຂະແໜງຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ ສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນປະກອບຄຳຄິດ, ຄຳເຫັນໃສ່ຮ່າງບົດສະຫຼຸບ ຢ່າງມີຈຸດສຸມ ເພື່ອເປັນທິດທາງໃນການປັບປຸງແກ້ໄຂບັນຫາຈຸດອ່ອນ, ຂໍ້ຄົງຄ້າງ ໃຫ້ນັບມື້ດີຂຶ້ນເປັນກ້າວໆ ສາມາດຮັບປະກັນຕາມສິດ, ພາລະບົດບາດໃນການເປັນເສນາທິການ, ປະສານສົມທົບ, ສະໜອງຂໍ້ມູນຂ່າວສານຮັບປະກັນດ້ານເນື້ອໃນໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຄະນະປະຈຳ ແລະ ຄະນະເລຂາທິການສະພາປະຊາຊົນແຂວງໃຫ້ນັບມື້ນັບດີຂຶ້ນ;

ຕອນທ້າຍ, ທ່ານ ຄຳຟອງ ກົ້ວມີໄຊ ມີຄຳເຫັນໂອ້ລົມເນັ້ນໜັກບາງບັນຫາສຳຄັນ ເຊິ່ງທ່ານສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງບັນດາທ່ານຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນທັງໝົດທີ່ຍາດມາໄດ້ໃນໄລຍະ 6 ເດືອນຜ່ານມາ ບົນພື້ນຖານຄວາມສາມັກຄີເປັນເອກະພາບ ພ້ອມກັນເຮັດສຳເລັດໜ້າທີ່ການເມືອງ ຕາມສິດພາລະບົດບາດ ຄວາມຮັບຜິດຊອບຂອງຕົນ. ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ແຕ່ລະຂະແໜງ ຈົ່ງພ້ອມກັນກຳແໜ້ນ ແລະ ຜັນຂະຫຍາຍທິດທາງແຜນການໃນ 6 ເດືອນທ້າຍປີ ແລະ ສູ້ຊົນແກ້ໄຂບັນຫາທີ່ຍັງຄົງຄ້າງ ເປັນຕົ້ນແມ່ນຄວາມເປັນເຈົ້າການຮັບຜິດຊອບຕໍ່ໜ້າທີ່ວຽກງານວິຊາສະເພາະຂອງຕົນ, ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີເປັນເອກະພາບພາຍໃນໃຫ້ໜັກແໜ້ນ ແລະ ພາຍນອກໃຫ້ກວ້າງຂວາງ ສືບຕໍ່ປັບປຸງແບບແຜນວິທີເຮັດວຽກ ແລະ ກົນໄກການປະສານງານ ໃຫ້ມີປະສິດພາບ ແລະ ປະສິດທິຜົນນັບມື້ສູງຂຶ້ນ. ໂອກາດດຽວກັນນີ້ ທ່ານຍັງໄດ້ເຜີຍແຜ່ເນື້ອໃນບົດບັນທຶກການຮ່ວມມືລະຫວ່າງ ແຂວງຫົວພັນ-ນະຄອນໂຮ່ຈີ່ມິງ ໄລຍະປີ 2022-2025; ຫົວພັນ-ເຫງະອານ ໄລຍະປີ 2023-2025 ແລະ ຫົວພັນ-ແທັງຮວ່າ ປະຈຳປີ 2023 ຕື່ມອີກ.

**(ສພຂ ຫົວພັນ)**



# ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສປນວ ຊຸດທີ II ໄດ້ປິດລົງຢ່າງເປັນທາງການ

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 4 ສິງຫາ 2023 ພາຍຫຼັງດຳເນີນມາແຕ່ວັນທີ 31 ກໍລະກົດຜ່ານມາ ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ປະທານ ສປນວ, ມີການນຳພັກ-ລັດນະຄອນຫຼວງວຽງຈັນ (ນວ), ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນວ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ແລະ ແຂກຖືກເຊີນເຂົ້າຮ່ວມ.



ທ່ານ ອານຸພາບ ຕຸນາລົມ ກ່າວໃນພິທີປິດຢ່າງເປັນທາງການວ່າ: ກອງປະຊຸມຄັ້ງນີ້ ໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຫຼາຍບັນຫາ ເປັນຕົ້ນແມ່ນພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າຄອງ ນວ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານໄລຍະກາງສະໄໝຂອງແຜນການ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງ ນວ; ບົດລາຍງານຂອງອົງການປົກຄອງ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ ສປນວ ໄດ້ຮັບຮອງເອົາຈຳນວນ 3 ສະບັບຄື: ຂໍ້ຕົກລົງວ່າດ້ວຍການຄວບຄຸມສຽງເບື້ອງນັບໃນ ນວ, ຂໍ້ຕົກລົງວ່າດ້ວຍການກຳນົດ ແລະ ຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້ຢູ່ ນວ ແລະ ຂໍ້ຕົກລົງວ່າດ້ວຍການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ; ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ 6 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023 ຢູ່ ນວ, ຄວາມຄືບໜ້າໃນການປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະທີ II ຕິດພັນກັບການແກ້ໄຂບັນຫາຢາເສບຕິດທີ່ເກີດຂຶ້ນໃໝ່ ເຊັ່ນ: ນ້ຳກະທ່ອມ, ປຸ່ມເປົ້າອັດແກັດທີ່ມີສານໄນຕັດອ່ອກໄຊ, ຢາສູບໄຟຟ້າ ແລະ ອື່ນໆ; ຮັບຟັງການຊີ້ແຈງບັນຫາສຳຄັນຕ່າງໆຂອງ ນວ ຈຳນວນ 8 ບັນຫາຄື: ການຈັດຕັ້ງປະຕິບັດໂຄງການສຳປະທານ ແລະ ລາຍຮັບຈາກການສຳປະທານທີ່ດິນຢູ່ ນວ, ການແກ້ໄຂໜີ້ສິນ, ການຄຸ້ມຄອງການຂຸດຄົ້ນແຮ່ທາດໃນຂອບເຂດ ນວ, ການຄຸ້ມຄອງທີ່ດິນທຸກປະເພດ, ການປ່ຽນແປງການນຳໃຊ້ທີ່ດິນ ຫຼື ການຫັນປ່ຽນທີ່ດິນໃນ ນວ, ການຕິດຕາມກວດກາ ແລະ ການແກ້ໄຂບັນຫາການຈັດສັນ, ບຸກລຸກ ແລະ ບຽດຍຶດທີ່ດິນທີ່ບໍ່ສອດຄ່ອງກັບກົດໝາຍທີ່ດິນໃນຂອບເຂດ ນວ, ການຄຸ້ມຄອງຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການຂອງຄົນຕ່າງປະເທດໃນ ນວ, ການແກ້ໄຂບັນຫາໄຟໄໝ້ລາມປ່າ, ວິທີການ ແລະ ມາດຕະການ ໃນການຕ້ານແລ້ງ-ຕ້ານຖ້ວມຢູ່ ນວ; ການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ນວ; ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນ ນວ ກ່ຽວກັບການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ; ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ; ຮັບຟັງການລາຍງານຂອງສານປະຊາຊົນ ນວ ກ່ຽວກັບການຍົກສູງຄຸນນະພາບໃນການຕັດສິນຄະດີແພ່ງ ແລະ ຄະດີອາຍາ ເປັນຂັ້ນຕົ້ນ ຢູ່ສານປະຊາຊົນ ນວ; ຮັບຟັງການລາຍງານຂອງພະແນກຍຸຕິທຳ ນວ ກ່ຽວກັບສາເຫດຂອງການປະຕິບັດຄຳຕັດສິນຊັກຊ້າ, ມາດຕະການ, ວິທີການແກ້ໄຂຂໍ້ຄົງຄ້າງ ຮອດທ້າຍປີ 2023 ຕິດພັນກັບການລາຍງານການທ້ອນໂຮມຊັບ, ວັດຖຸສິ່ງຂອງ ແລະ ຄ່າປັບໃໝຕາມຄຳຕັດສິນຂອງສານ; ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງ ສປນວ, ຕິດພັນກັບແຜນການເຄື່ອນໄຫວພົບປະປະຊາຊົນ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສປນວ ຊຸດທີ II; ດຳເນີນການປະເມີນໃຫ້ຄະແນນຄວາມໄວ້ວາງໃຈໄລຍະກາງສະໄໝ (2021-2025) ຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນດຳລົງຕຳແໜ່ງ ທີ່ ສປນວ ແລະ ຄະນະປະຈຳ ສປນວ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ປະທານ ສປນວ ກ່າວຕື່ມວ່າ: ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສປນວ ຊຸດທີ II ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກ ນວ ເຂົ້າສູ່ວຽກງານຕົວຈິງ, ແມ່ນໝາກຜົນຂອງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບທາງດ້ານການເມືອງ, ຄວາມເປັນເຈົ້າການຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສສນວ ໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງ ນວ ທັງເປັນການຕັດສິນໃຈຂອງອົງການປົກຄອງ, ບັນດາພະແນກການ, ອົງການທີ່ກ່ຽວຂ້ອງໃນການສືບຕໍ່ຈັດຕັ້ງປະຕິບັດແຜນການທີ່ແຕ່ລະອົງການໄດ້ຮັບຜິດຊອບໃຫ້ປາກົດຜົນເປັນຈິງ.



## ສພຂ ຫົວພັນ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຊຸດທີ II



(ສພຊ) ຕອນເຊົ້າຂອງວັນທີ 2 ສິງຫາ 2023 ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສະພາປະຊາຊົນແຂວງ (ສພຂ) ຫົວພັນ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ທີ່ຫ້ອງປະຊຸມຂອງ ສພຂ ຫົວພັນ ພາຍໃຕ້ການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານ ສພຂ ຫົວພັນ; ເຂົ້າຮ່ວມໂດຍທ່ານ ວັນໄຊ ແພງຊຸມມາ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງແຂວງຫົວພັນ; ມີທ່ານ ຄຳແພງ ວິລະພັນ ສະມາຊິກສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳສະພາແຫ່ງຊາດ; ບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II, ເຈົ້າເມືອງ 10 ເມືອງ, ອະດີດການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ສສຂ ຊຸດທີ I, ຜູ້ຕາງໜ້າອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າ, ສອງກອງບັນຊາການແລະພາກສ່ວນທຸລະກິດ ເຂົ້າຮ່ວມທັງໝົດ 105 ທ່ານ ຍິງ 17 ທ່ານ.

ວາລະກອງປະຊຸມ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໃນນາມປະທານກອງປະຊຸມ ກ່າວບົດສູນທອນພົດກ່າວໄຂກອງປະຊຸມວ່າ: ໃນທ່າມກາງບັນຍາກາດທີ່ທົ່ວພັກ-ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນບັນດາເຜົ່າເວົ້າລວມ ເວົ້າສະເພາະທົ່ວແຂວງຫົວພັນ, ພວມສຳເລັດກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຂວງຫົວພັນ ສະໄໝຄັ້ງທີ X ຄຽງຄູ່ກັບການຈັດຕັ້ງຜັນຂະຫຍາຍມະຕິ XI ຂອງພັກມະຕິ X ຂອງອົງຄະນະພັກແຂວງຫົວພັນ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 5 ປີ ຄັ້ງທີ IX ກໍຄືບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຫົວພັນ ຊຸດທີ II ໂດຍສະເພາະແມ່ນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023, ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຕິດພັດກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຢ່າງເປັນຂະບວນການຟົດຟື້ນ, ແຂງແຮງ ແລະ ເປັນຮູບປະທຳຫຼາຍຂຶ້ນ.

ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ ໃນໄລຍະ 6 ເດືອນຕົ້ນປີ 2023 ແມ່ນຢູ່ໃນສະພາບການຂອງພາກພື້ນ ແລະ ສາກົນທີ່ມີການຜັນແປໄປຢ່າງສະຫຼັບຊັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫຼູແຫຼມທີ່ຄາດຄະເນໄດ້ຍາກ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ປະເທດລາວເວົ້າລວມ ເວົ້າສະເພາະແຂວງຫົວພັນ ໂດຍສະເພາະແມ່ນການແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍພົບຫຼາຍສິ່ງທ້າທາຍອັນໃໝ່ເປັນຕົ້ນເງິນເຟີ້, ລາຄານ້ຳມັນເຊື້ອໄຟ ແລະ ລາຄາສິນຄ້າເພີ່ມຂຶ້ນສູງ, ເຮັດໃຫ້ມີຜົນກະທົບຢ່າງແຮງຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າມີຄວາມຝືດເຄືອງ ແລະ ພົບກັບບັນຫາຄວາມຫຍຸ້ງຍາກຫຼາຍຢ່າງ. ແຕ່ເຖິງວ່າສະພາບການປັດຈຸບັນຈະຫຍຸ້ງຍາກປານໃດກໍຕາມ ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງອົງຄະນະພັກແຂວງ ຊຸດທີ X ແລະ ດ້ວຍການເສີມຂະຫຍາຍຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຄະນະພັກ, ອົງການອຳນາດລັດແຕ່ລະຂັ້ນ ກໍຄືການເສີມຂະຫຍາຍຄວາມເປັນເຈົ້າການຫົວຄິດປະດິດສ້າງຂອງປະຊາຊົນໃນແຕ່ລະທ້ອງຖິ່ນຕາມທ່າແຮງບົ່ມຊ້ອນຕົວຈິງທີ່ມີ ແລະ ການສະໜັບສະໜູນ, ການຊ່ວຍເຫຼືອຈາກອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງທາງສັງຄົມທຸກຂັ້ນ ແລະ ການຊ່ວຍເຫຼືອຈາກແຂວງແຮກສ່ຽວ ຫວຽດນາມ ແລະ ອົງການຈັດຕັ້ງສາກົນໄດ້ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂອງແຂວງໃນໄລຍະ 6 ເດືອນຕົ້ນປີ 2023 ຜ່ານມາມີທ່າຂະຫຍາຍຕົວໃນລະດັບດີພໍສົມຄວນ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການພັດທະນາຄ່ອຍໆດີຂຶ້ນ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ຈະໄດ້ຮັບຟັງການລາຍງານ ແລະ ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງຄື: ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງອົງການປົກຄອງແຂວງ ກາງສະໄໝ (2021-2023), ທິດທາງທ້າຍສະໄໝ (2023-2025) ວຽກງານທີ່ພົ້ນເດັ່ນ 6 ເດືອນຕົ້ນປີ ແລະ ທິດທາງຈຸດສຸມ 6 ເດືອນທ້າຍປີ 2023; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ (2021-2023), ທິດທາງທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງອົງການປົກຄອງແຂວງ; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ກາງສະໄໝ (2021-2023), ທິດທາງທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງອົງການປົກຄອງແຂວງ; ການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຸ້ຍງຍາກທາງດ້ານເສດຖະກິດ-ການເງິນ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງແຂວງຫົວພັນ; ການຄຸ້ມຄອງ, ການສຳຫຼວດ, ການຂຸດຄົ້ນ ແລະ ສົ່ງອອກແຮ່ທາດຂອງແຂວງຫົວພັນ; ບັນດາກິດຈະການເຊົ່າ, ສຳປະທານທີ່ດິນ ເພື່ອການລົງທຶນ ແລະ ກິດຈະການການສຳຫຼວດຂຸດຄົ້ນແຮ່ທາດທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຢູ່ແຂວງຫົວພັນ; ການເຄື່ອນໄຫວວຽກງານກາງສະໄໝ (2021-2023), ທິດທາງທ້າຍສະໄໝ (2023-2025) ແລະ ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງຫົວພັນ; ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ການເຄື່ອນໄຫວວຽກງານ ກາງສະໄໝ (2021-2023), ທິດທາງທ້າຍສະໄໝ (2023-2025) ແລະ ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງ ສພຂ ຫົວພັນ; ປະເມີນຄວາມໄວ້ວາງໃຈຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ນອກຈາກນີ້, ກອງປະຊຸມໄດ້ຮັບຟັງການອະທິບາຍ, ຊີ້ແຈງ ແລະ ຕອບຄຳຊັກຖາມຂອງບັນດາທ່ານ ສສຂ ແລະ ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງກ່ຽວກັບວຽກງານຕ່າງໆຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງຫົວພັນ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ຄັ້ງນີ້ ໄດ້ດຳເນີນເປັນເວລາ 3 ວັນເຕັມ ນັບແຕ່ວັນທີ 2-4 ສິງຫາ 2023 ແລະ ສຳເລັດລົງດ້ວຍໝາກຜົນອັນຈົບງາມ .

**(ນາງ ປຸ້ຍນິຕາ ເພັງມີໄຊ)**



## ຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຮ່າຕິ້ງ ສສ.ຫວຽດນາມ




(ສພຊ) ຕອນເຊົ້າຂອງວັນທີ 27 ກໍລະກົດ 2023 ຄະນະຜູ້ແທນສະພາປະຊາຊົນແຂວງບໍລິຄຳໄຊ ນຳໂດຍສະຫາຍ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໄດ້ເຂົ້າຮ່ວມກອງປະຊຸມພົບປະແລກປ່ຽນບົດຮຽນຮ່ວມກັບຄະນະຜູ້ແທນສະພາປະຊາຊົນແຂວງຮ່າຕິ້ງ ສສ. ຫວຽດນາມ ນຳໂດຍສະຫາຍ ເຈິ່ນຕູແອັ່ງ ຄະນະປະຈຳພັກແຂວງ, ຮອງປະທານຜູ້ປະຈຳການສະພາປະຊາຊົນແຂວງຮ່າຕິ້ງ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການທັງສອງຝ່າຍເຂົ້າຮ່ວມ.

ໃນວາລະກອງປະຊຸມ, ໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງບໍລິຄຳໄຊ ແລະ ແຂວງຮ່າຕິ້ງ. ພ້ອມນີ້, ຍັງໄດ້ພົບປະແລກປ່ຽນບົດຮຽນຕໍ່ວຽກງານສະພາປະຊາຊົນຂັ້ນແຂວງໃນຫົວຂໍ້: ບົດຮຽນການສ້າງ ແລະ ປັບປຸງນິຕິກຳ, ການຕິດຕາມກວດກາ, ການປະເມີນຄວາມໄວ້ວາງໃຈຕໍ່ບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ການແກ້ໄຂຄຳສະເໜີຂອງປະຊາຊົນ ຢ່າງກົງໄປກົງມາ ດ້ວຍບັນຍາກາດຟົດຟື້ນ ສ້າງສັນ ບົນຈິດໃຈຄວາມສາມັກຄີຮັກແພງ ພ້ອມທັງສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານຕາມພາລະບົດຂອງສະພາປະຊາຊົນຂັ້ນແຂວງ, ແລກປ່ຽນບົດຮຽນ, ບຳລຸງສ້າງພະນັກງານ, ການໄປມາຢ້ຽມຢາມ ເພື່ອສ້າງຄວາມເຂົ້າໃຈ ແລະ ຍົກລະດັບໃນການປະຕິບັດໜ້າທີ່ໃຫ້ມີຄວາມເຂັ້ມແຂງ.

ໃນວັນດຽວກັນນີ້, ຄະນະຜູ້ແທນສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍເລຂາພັກແຂວງຮ່າຕິ້ງ ສສ.ຫວຽດນາມ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຮ່າຕິ້ງ ສສ.ຫວຽດນາມ ຄັ້ງນີ້ ເຊິ່ງການເຄື່ອນໄຫວຄັ້ງນີ້ ທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ລະຫວ່າງ ສປປ ລາວ ແລະ ສສ.ຫວຽດນາມເວົ້າລວມ ເວົ້າສະເພາະແຂວງບໍລິຄຳໄຊ ແລະ ແຂວງຮ່າຕິ້ງ ທັງເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຖູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງສະພາປະຊາຊົນແຂວງ ກໍຄືຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຫ້ອງວ່າການຄະນະສະມາຊິກແຫ່ງຊາດ ແລະ ສະພະຊາຊົນຂັ້ນແຂວງ ໃຫ້ມີການພັດທະນາຍິ່ງໆຂຶ້ນ.

## ເກັບກຳຂໍ້ມູນກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ



(ສພຊ) ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງອຸດົມໄຊ ໄດ້ເຄື່ອນໄຫວເກັບກຳຂໍ້ມູນກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຢູ່ເມືອງຫຼາ ແຂວງອຸດົມໄຊ ໃນວັນທີ 25 ກໍລະກົດ 2023 ນຳໂດຍທ່ານ ສີພອນ ອິນຕະວົງ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ມີທ່ານ ນາງ ໄລອອນ ຈັນທະລາ ແລະ ທ່ານ ດຣ. ຈື່ວາ ຊາວເຊັ່ງ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຫຼາ, ມີຜູ້ຕາງໜ້າຈາກຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງ, ຕາງໜ້າເຈົ້າຂອງຄຳຮ້ອງຂໍຄວາມເປັນທຳ, ຄະນະທີມງານຈາກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກຂັ້ນເມືອງເຂົ້າຮ່ວມ.

ການເກັບກຳຂໍ້ມູນຄັ້ງນີ້, ຫ້ອງການກ່ຽວຂ້ອງໄດ້ລາຍງານສະພາບການທີ່ເກີດຂຶ້ນໂດຍຫຍໍ້ ກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງເລື່ອງ: ຂໍໃຫ້ພິຈາລະນາແກ້ໄຂທີ່ດິນທີ່ຖືກໂຄງການກໍ່ສ້າງເສັ້ນທາງຕັດຜ່ານທີ່ດິນຂອງປະຊາຊົນ ໃຫ້ຜູ້ເຂົ້າຮ່ວມຮັບຟັງ. ຈາກນັ້ນ, ໄດ້ມີຄຳຄິດຄຳເຫັນແລກປ່ຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ພ້ອມທັງໄດ້ລົງເຄື່ອນໄຫວພື້ນທີ່ຕົວຈິງຕື່ມອີກ.

ທັງນີ້, ກໍເພື່ອເປັນຂໍ້ມູນໃຫ້ແກ່ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ໃນການຄົ້ນຄວ້າ, ສະເໜີພາກສ່ວນກ່ຽວຂ້ອງ, ລາຍງານໃຫ້ຄະນະປະຈຳສະພາປະຊາຊົນແຂວງ ແລະ ແຈ້ງຕອບໃຫ້ປະຊາຊົນ.

**(ນັກຂ່າວ ສພຂ ອຸດົມໄຊ)**

## ຮອງປະທານສະພາປະຊາຊົນແຂວງເຊກອງ ເຄື່ອນໄຫວວຽກງານຢູ່ເຂດຈຸດສຸມພັດທະນາ

(ສພຊ) ໃນເດືອນກໍລະກົດຜ່ານມາ ສະພາປະຊາຊົນແຂວງ (ສພຂ) ເຊກອງ ນຳໂດຍ ທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານ ສພຂ ພ້ອມດ້ວຍ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ສົມທົບກັບພະແນກການທີ່ກ່ຽວຂ້ອງຂອງແຂວງ ໄດ້ເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຢູ່ 3 ເຂດຈຸດສຸມພັດທະນາຂອງເມືອງກະລຶມ ຄື: ຈຸດສຸມພັດທະນາບ້ານ ທົ່ງແຄນ, ຈຸດສຸມພັດທະນາບ້ານສອງຄອນ ແລະ ຈຸດສຸມພັດທະນາບ້ານຈະເຣະ ໂດຍມີອຳນາດການປົກຄອງຂອງເມືອງ, ຫົວໜ້າກຸ່ມ, ອຳນາດການປົກຄອງບ້ານ, ພະນັກງານຄູ-ອາຈານ, ແພດໝໍ ແລະ ພໍ່ແມ່ປະຊາຊົນ 5 ບ້ານ ເຂົ້າຮ່ວມ.



ການເຄື່ອນໄຫວຄັ້ງນີ້ ແມ່ນໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບັນດາປາກົດການຫຍໍ້ທໍ້ ແລະ ຄຳສະເໜີຕ່າງໆຂອງພໍ່ແມ່ປະຊາຊົນພາຍໃນບ້ານ ໂດຍສະເພາະດ້ານວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ການພັດທະນາຊົນນະບົດ. ຜ່ານການຮັບຟັງສາມາດເກັບກຳໄດ້ສະພາບຄວາມຫຍຸ້ງຍາກຫຼາຍໆດ້ານ ໂດຍສະເພາະດ້ານສຶກສາແມ່ນຍັງຂາດບຸກຄະລາກອນຄູ, ອຸປະກອນການຮຽນ-ການສອນ ແລະ ທຶນນະໂຍບາຍແກ່ຄອບຄົວທີ່ທຸກຍາກຂາດເຂີນ; ດ້ານສາທາແມ່ນດ້ານບຸກຄະລາກອນແພດ-ໝໍບໍ່ພຽງພໍ, ຢາປົວພະຍາດ ແລະ ສະຖານທີ່ເຮັດວຽກຍັງຄັບແຄບ ແລະ ວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກການຈັດສັນເນື້ອທີ່ທຳການຜະລິດຂອງຜະຊາຊົນ ແລະ ບັນຫາອື່ນໆ.

ທັງນີ້, ກໍເພື່ອເກັບກຳຂໍ້ມູນກ່ຽວກັບສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນດາປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນໄລຍະຜ່ານມາຢູ່ເຂດຈຸດສຸມພັດທະນາດັ່ງກ່າວ ເພື່ອລາຍງານຕໍ່ຄະນະປະຈຳພັກເມືອງກະລຶມໄດ້ຮັບຊາບ ພ້ອມທັງສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.

**(ນາລີວັນ)**

## ປາຖະກະຖາວັນຄ້າຍວັນເກີດປະທານ ສຸພານຸວົງ ຄົບຮອບ 114 ປີ





(ສພຊ) ເພື່ອເປັນການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງອັດຕະປື ໄດ້ຮັບຮູ້, ເຊື່ອມຊຶມ ແລະ ກຳແໜ້ນກ່ຽວກັບບັນດາຜົນງານຂອງຜູ້ນຳພັກ-ລັດ ຜູ້ນຳທີ່ແສນເຄົາລົບຮັກຂອງພວກເຮົາ ໃນການຕໍ່ສູ້ກັບພວກລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ທັງເປັນການສຶກສາອົບຮົມ, ການຮ່ຳຮຽນເອົາມູນເຊື້ອຮັກຊາດ, ຄວາມສາມັກຄີ, ນ້ຳໃຈຕໍ່ສູ້ກູ້ຊາດບໍ່ຍອມຈຳນົນອັນພິລະອາດຫານ, ນ້ຳໃຈເສຍສະຫຼະອັນສູງສົ່ງຂອງຜູ້ນຳພັກ-ລັດ ທີ່ມີຕໍ່ປະເທດຊາດ.

ສະພາປະຊາຊົນແຂວງອັດຕະປື ໄດ້ຈັດພິທີປາຖະກະຖາຫວນຄືນຊີວິດ ແລະ ການເຄື່ອນໄຫວຂອງ ປະທານ ສຸພານຸວົງ ໃນໂອກາດວັນຄ້າຍວັນເກີດ ຄົບຮອບ 114 ປີ (13/7/1909-13/7/2023) ໃນວັນທີ 13 ກໍລະກົດ 2023 ໂດຍການປາຖະກະຖາຂອງ ທ່ານ ແຫວນຄຳ ປະທຸມມະແສງ ເລຂາໜ່ວຍພັກຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີບັນດາສະຫາຍເລຂາໜ່ວຍພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງອັດຕະປືເຂົ້າຮ່ວມ.

ທ່ານ ແຫວນຄຳ ປະທຸມມະແສງ ໄດ້ຫວນຄືນຊີວິດການເຄື່ອນໄຫວ ແລະ ຜົນງານທີ່ພົ້ນເດັ່ນຂອງປະທານ ສຸພານຸວົງ ໂດຍຫຍໍ້ວ່າ: ປະທານ ສຸພານຸວົງ ໄດ້ເຂົ້າສຶກສາຊັ້ນປະຖົມຢູ່ຫຼວງພະບາງ, ຊັ້ນມັດທະຍົມຢູ່ນະຄອນຫຼວງຮ່າໂນ້ຍ ສສ.ຫວຽດນາມ ແລະ ສຶກສາຕໍ່ລະດັບປະລິນຍາຕີ ສາຂາວິສະວະກຳກໍ່ສ້າງ ແລະ ຂົວທາງຢູ່ນະຄອນຫຼວງປາຣີ ປະເທດຝຣັ່ງ, ໄດ້ເຂົ້າຮ່ວມບັນດາຂະບວນການຕໍ່ສູ້ຢ່າງພິລະອາດຫານຕ້ານຈັກກະພັດພວກລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່. ປະທານ ສຸພານຸວົງ ແມ່ນເປັນຜູ້ນຳທີ່ມີຄວາມຈົງຮັກພັກດີຕໍ່ອຸດົມການປະຕິວັດຢ່າງເດັດຂາດ, ຕໍ່ສູ້ຢ່າງພິລະອາດຫານບໍ່ຍອມຈຳນົນ ຍາມໃດກໍໄດ້ຍົກສູງສະຕິເປັນເຈົ້າຕໍ່ການຈັດຕັ້ງ, ນັບຖືໝູ່ຄະນະ, ເອື້ອເຟື້ອຮັກແພງມິດສະຫາຍຢ່າງຈິງໃຈ; ມີທັດສະນະຫຼັກໝັ້ນອັນໜັກແໜ້ນ ແລະ ນ້ຳໃຈເສຍສະຫຼະອັນສູງສົ່ງເພື່ອຊາດເພື່ອປະຊາຊົນ; ເປັນໜຶ່ງໃນບັນດາຜູ້ນຳທີ່ດີເດັ່ນ ແລະ ເຄົາລົບຮັກຂອງປະຊາຊົນລາວເຜົ່າຕ່າງໆ, ທ່ານໄດ້ອຸທິດໝົດຈິດໝົດໃຈດ້ານຄວາມສາມາດ ແລະ ຫົວຄິດປະດິດສ້າງຂອງຕົນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອເອກະລາດ, ອະທິປະໄຕຂອງຊາດ ແລະ ຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ.

ໃນໂອກາດນີ້, ທ່ານ ນາງ ຈັນທະລີ ສີສຸວົງ ເລຂາໜ່ວຍພັກຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຍັງໄດ້ເຜີຍແຜ່ເຊື່ອມຊຶມ ວັນສິນທິສັນຍາມິດຕະພາບການຮ່ວມມືລາວ-ຫວຽດນາມ ຄົບຮອບ 46 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 61 ປີ ໃຫ້ຮັບຮູ້ຕື່ມອີກ.

**(ວິມັດ)**

## ບາງວິທີການຕົ້ນຕໍ ໃນການຝຶກຝົນຫຼໍ່ຫຼອມ ຄຸນສົມບັດສິນທຳຂອງຊາວໜຸ່ມ 4 ຂົງເຂດ

(ສພຊ) ໃນໂອກາດເຂົ້າຮ່ວມກອງປະຊຸມເຜີຍແຜ່ເຊື່ອມຊຶມມະຕິກຳວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກຊາວໜຸ່ມໜ່ວຍຮາກຖານຫ້ອງວ່າການແຂວງແລະສະພາປະຊາຊົນແຂວງອຸດົມໄຊ ເຊິ່ງໄດ້ຈັດຂຶ້ນໃນເມື່ອທ້າຍເດືອນມິຖຸນາຜ່ານມາ ທີ່ຫ້ອງປະຊຸມຊັ້ນ 3 ຫ້ອງວ່າການແຂວງ ໂດຍການເປັນປະທານຂອງສະຫາຍກອງຄຳ ໄຊພົມປັນ ຄະນະບໍລິຫານງານຊາວໜຸ່ມແຂວງ, ຮອງຫົວໜ້າຫ້ອງວ່າການແຂວງ, ມີສະຫາຍເລຂາໜ່ວຍຊາວໜຸ່ມ, ບັນດາສະຫາຍຄະນະໜ່ວຍຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານຫ້ອງວ່າການແຂວງ ແລະ ສະພາປະຊາຊົນແຂວງ ເຂົ້າຮ່ວມ.



ສະຫາຍ ກອງຄຳ ໄຊພົມປັນ ຄະນະບໍລິຫານງານຊາວໜຸ່ມແຂວງ, ຮອງຫົວໜ້າຫ້ອງວ່າການແຂວງ, ໄດ້ເຜີຍແຜ່ເຊື່ອມຊຶມມູນເຊື້ອຊາວໜຸ່ມລາວ ແລະ ໄດ້ຍົກໃຫ້ຮູ້ບາງວິທີການຕົ້ນຕໍໃນການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳ ຂອງຊາວໜຸ່ມ 4 ຂົງເຂດຄື:

1). ຊາວໜຸ່ມໃນອົງການຈັດຕັ້ງພັກ-ລັດ: ຊາວໜຸ່ມທີ່ສັງກັດຢູ່ໃນກົງຈັກພັກ-ລັດ ແມ່ນໃຫ້ຕັ້ງໜ້າຫ້າວຫັນເຮັດສຳເລັດໜ້າທີ່ວິຊາສະເພາະທີ່ພັກ-ລັດແລະການຈັດຕັ້ງມອບໝາຍໃຫ້ເປັນຢ່າງດີ, ປະຕິບັດລະບຽບລັດຖະກອນ, ລະບຽບກົດໝາຍຂອງບ້ານເມືອງຢ່າງເຂັ້ມງວດ, ຕັ້ງໜ້າໃນການຄົ້ນຄວ້າ, ຮ່ຳຮຽນວິຊາຄວາມຮູ້ຄວາມສາມາດດ້ານຕ່າງໆໃຫ້ສູງຂຶ້ນເລື້ອຍໆ, ຕຳນິວິຈານຢ່າງເຄັ່ງຂຶມຕໍ່ທັດສະນະຂີ້ຄ້ານຄົ້ນຄ້ວາຮ່ຳຮຽນ, ມົວເມົາແຕ່ການຫຼິ້ນກິນຟູມເຟືອຍເຮຮາ, ບໍ່ມີປະໂຫຍດ ແລະ ເປັນພິດໄພຕໍ່ສັງຄົມ.

2). ຊາວໜຸ່ມໃນຖັນແຖວນັກຮຽນ: ຊາວໜຸ່ມ-ເຍົາວະຊົນ ແລະ ອະນຸຊົນ ທີ່ກຳລັງຢູ່ໃນໄວຮຽນຮູ້ ຕ້ອງຕັ້ງໜ້າສຶກສາຮ່ຳຮຽນເອົາວິຊາຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳມາຮັບໃຊ້ຊາດຮັບໃຊ້ປະຊາຊົນ, ສ້າງຄຸນປະໂຫຍດໃຫ້ແກ່ຕົນເອງ, ຮູ້ຍາດເອົາກາລະໂອກາດ ຍາມຍັງໜຸ່ມແໜ້ນນີ້ເພື່ອຄົ້ນຄ້ວາຮ່ຳຮຽນ, ຝຶກຝົນໃຫ້ຕົນເອງເປັນຄົນທີ່ມີປະໂຫຍດແກ່ປະເທດຊາດບ້ານເມືອງ. ຊີວິດໄວໜຸ່ມກວ້າງໄກ ແລະ ສົດໃສ ບໍ່ຄວນປ່ອຍໃຫ້ມັນເລື່ອນລອຍໄປນຳອັນທີ່ບໍ່ເປັນປະໂຫຍດ ແລະ ປະເວລາຜ່ານໄປເຊັ່ນ: ການມົວເມົາຫຼິ້ນກິນເຮຮາ, ສ້າງກຸ່ມກ້ອນອາລະວາດຕີກັນ, ເສບສິ່ງເສບຕິດ, ຂັບລົດແຂ່ງກັນ ແລະ ອື່ນໆ ທີ່ເປັນພິດເປັນໄພຕໍ່ສັງຄົມ ເຊິ່ງສຸດທ້າຍຈະຮ່ຳຮຽນກໍ່ລຳບາກ, ຈະຝຶກຝົນຕົນເອງກໍຍາກດັ່ງຄຳບູຮານເພິ່ນວ່າ: "ໄມ້ແກ່ກາຍຍາມເບັດ ເຫັດແກ່ກາຍຍາມແກງ" ຊາວໜຸ່ມເຍົາວະຊົນຄວນຖືເອົາຄຳເວົ້າຂອງທ່ານ ເລນິນ ເປັນຄະຕິເຕືອນໃຈຄື: "ຮຽນແລ້ວຮຽນອີກຮຽນເລື້ອຍໆໄປ" ເພື່ອມີຄວາມຮູ້, ຄວາມສະຫລຽວສະຫລາດ ເຊິ່ງຈະກາຍເປັນທຶນຮອນ ແລະ ເປັນຊັບສົມບັດທີ່ປະເສີດເລີດລ້ຳໃຊ້ບໍ່ໝົດໃນຊີວິດ.

3). ຊາວໜຸ່ມໃນຖັນແຖວກຳມະກອນ-ກະສິກອນ: ສຳລັບຊາວໜຸ່ມກຳມະກອນແມ່ນຕັ້ງໜ້າສຸມໃສ່ການຜະລິດ, ກໍ່ສ້າງກິດຈະການຕ່າງໆ ຂອງປະເທດຊາດຢ່າງມີປະສິດທິຜົນ, ຍົກສູງສີມືແຮງງານຂອງຕົນໃຫ້ນັບມື້ນັບສູງຂຶ້ນ, ມີສະຕິຕໍ່ການຈັດຕັ້ງປະຕິບັດຕາມກົດໝາຍແຮງງານຢ່າງຖືກຕ້ອງ ແລະ ເຂັ້ມງວດ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາຊັບສົມບັດຂອງສ່ວນລວມ ແລະ ຂອງຊາດ, ສຳລັບຊາວໜຸ່ມກະສິກອນ ແມ່ນຕັ້ງໜ້າຫ້າວຫັນເຂົ້າໃນການຜະລິດກະສິກຳເປັນສິນຄ້າສ້າງເສດຖະກິດຄອບຄົວ ແລະ ຄອບຄົວຕົວແບບ, ຫັນຈາກການຜະລິດແບບດັ້ງເດີມຕາມທຳມະຊາດພໍແຕ່ກຸ້ມກິນ, ໄປສູ່ການຜະລິດທີ່ກ້າວໜ້າເປັນສິນຄ້າເຮັດໃຫ້ເສດຖະກິດຢູ່ຊົນນະບົດຂະຫຍາຍຕົວ, ຊີວິດການເປັນຢູ່ຂອງຄອບຄົວນັບມື້ນັບດີຂຶ້ນເປັນກ້າວໆ, ສ້າງຕົນເອງເປັນພົນລະເມືອງດີ, ຕັ້ງໜ້າເຮັດພັນທະຕໍ່ປະເທດຊາດ ແລະ ບ້ານຊ່ອງຂອງຕົນເປັນຢ່າງດີ, ເຮັດໃຫ້ບ້ານເມືອງ, ທ້ອງຖິ່ນຂອງຕົນມີຄວາມສະຫງົບສຸກມີຄວາມສາມັກຄີຢ່າງເປັນປຶກແຜນແໜ້ນໜາ.

4). ຊາວໜຸ່ມໃນຂົງເຂດຫົວໜ່ວຍທຸລະກິດ-ການຄ້າຂາຍຕ່າງໆ: ຕ້ອງຕັ້ງໜ້າດຳເນີນທຸລະກິດການຄ້າຂາຍຂອງຕົນໃຫ້ມີຜົນກຳໄລທີ່ເໝາະສົມ ແລະ ຊອບທຳ, ມີຄຸນສົມບັດສິນທຳ, ເວົ້າຈາສຸພາບອ່ອນໂຍນ, ການທຳມາຄ້າຂາຍຖືກຕາມລະບຽບກົດໝາຍ, ເສຍພັນທະຕໍ່ປະເທດຊາດຢ່າງຖືກຕ້ອງ ແລະ ທັນເວລາ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ.

**(ນັກຂ່າວ ສພຂ)**






# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

ການສົ່ງອອກຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ເພື່ອການວິໄຈ ແລະ ການວາງສະແດງ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຕ້ອງໄດ້ນຳເອົາຜົນງານດ້ານວິຈິດສິນດັ່ງກ່າວ ພ້ອມດ້ວຍຜົນຂອງການວິໄຈ ກັບຄືນປະເທດ ພາຍໃນເວລາໜຶ່ງປີ ນັບແຕ່ວັນໄດ້ຮັບອະນຸຍາດສົ່ງອອກ ເປັນຕົ້ນໄປ.

**ມາດຕາ 37 ການນຳເຂົ້າ, ການໂຄສະນາ ການເຜີຍແຜ່ ຫຼື ຈຳໜ່າຍ**

ການນຳເຂົ້າ, ການໂຄສະນາ ການເຜີຍແຜ່ ຫຼື ຈຳໜ່າຍແບບ, ແມ່ພິມ ແລະ ຜົນງານດ້ານວິຈິດສິນ ຂອງຕ່າງປະເທດ ຕ້ອງໄດ້ຮັບການກວດກາ ແລະ ອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 38 ການໂອນ**

ຜົນງານດ້ານວິຈິດສິນທີ່ໄດ້ຂຶ້ນທະບຽນແລ້ວ ສາມາດໂອນກຳມະສິດ, ລິຂະສິດ ໃຫ້ຜູ້ອື່ນໄດ້ ແຕ່ຕ້ອງແຈ້ງໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນຂຶ້ນທະບຽນ ແລະ ດຳເນີນການໂອນຕາມກົດໝາຍ.

**ມາດຕາ 39 ການ ຊື້ ຂາຍ, ແລກປ່ຽນ ແລະ ການເຊົ່າ**

ຜົນງານດ້ານວິຈິດສິນລະດັບທ້ອງຖິ່ນ ແລະ ຜົນງານວິຈິດສິນລະດັບຊາດທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນກຳມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊຶ່ງມີຈຸດປະສົງ ຊື້ ຂາຍ, ແລກປ່ຽນ ຕ້ອງໄດ້ຂໍອະນຸຍາດນຳລັດຖະບານ ຫຼື ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມແຕ່ລະກໍລະນີ. ໃນກໍລະນີຜົນງານດ້ານວິຈິດສິນນັ້ນ ຫາກມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ລັດມີບຸລິມະສິດຊື້ເອົາຕາມລາຄາທີ່ຕົກລົງກັນ.

ຜົນງານດ້ານວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນຕົ້ນສະບັບ ບໍ່ສາມາດຊື້ ຂາຍ, ແລກປ່ຽນ ຫຼື ມອບເປັນຂອງຂວັນໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ສຳລັບການເຊົ່າຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນຕົ້ນສະບັບລະຫວ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ບົນພື້ນຖານການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 40 ການສືບທອດ**

ຜົນງານດ້ານວິຈິດສິນ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດສືບທອດ, ມອບໂອນໃຫ້ຜູ້ອື່ນ ແຕ່ກ່ອນຈະດຳເນີນການມອບໂອນໃຫ້ຜູ້ອື່ນສືບທອດນັ້ນ ຕ້ອງແຈ້ງ ຫຼື ຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ໄດ້ຂຶ້ນທະບຽນ ຕາມແຕ່ລະກໍລະນີ.

ໃນກໍລະນີມີຫຼາຍຄົນໄດ້ຮັບການສືບທອດຮ່ວມກັນ ຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ຜູ້ໃດຜູ້ໜຶ່ງ ເປັນຕົວແທນ.

## ໝວດທີ 2
## ການປົກປັກຮັກສາ ແລະ ການອະນຸລັກ ຜົນງານດ້ານວິຈິດສິນ

**ມາດຕາ 41 ການປົກປັກຮັກສາ ແລະ ການອະນຸລັກ ຜົນງານດ້ານວິຈິດສິນ**

ຜົນງານດ້ານວິຈິດສິນ ທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງໄດ້ຮັບການປົກປັກຮັກສາ ແລະ ອະນຸລັກ ເພື່ອບໍ່ໃຫ້ຖືກທຳລາຍ ຫຼື ເສຍຫາຍຈາກການກະທຳຂອງຄົນ ຫຼື ຈາກໄພທຳມະຊາດ ໂດຍສະເພາະຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ.

**ມາດຕາ 42 ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນເຈົ້າການ ແລະ ມີສ່ວນຮ່ວມ ໃນການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ ຕາມຂອບເຂດ ແລະ ຄວາມຮັບຜິດຊອບຂອງຕົນ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນລະດັບທ້ອງຖິ່ນ ທີ່ມີຄຸນຄ່າ ສູງ, ໂດດເດັ່ນ ແລະ ຫາຍາກ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ຕົນຂຶ້ນທະບຽນ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ພາກ ສ່ວນອື່ນທີ່ກ່ຽວຂ້ອງ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນລະດັບຊາດ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 43 ເງື່ອນໄຂການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ**

ການບູລະນະສ້ອມແປງ ແລະ ການປະຕິສັງຂອນຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນ ວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂ ໃນການບູລະນະສ້ອມແປງ ແລະ ການປະຕິສັງຂອນຜົນງານດ້ານວິຈິດສິນ ທີ່ມີນາຍຊ່າງສີມືທີ່ຊຳນານງານ ທາງດ້ານວິຈິດສິນ;
2. ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານວິຈິດສິນ ບ່ອນທີ່ໄດ້ຂຶ້ນທະບຽນ. ສຳລັບວິຈິດສິນລະດັບຊາດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
3. ຕ້ອງຮັກສາຄຸນລັກສະນະເດີມຂອງຜົນງານດ້ານວິຈິດສິນນັ້ນໄວ້ ເປັນຕົ້ນ ຮູບຮ່າງ, ສີສັນ, ລວດລາຍ ລວມທັງວັດສະດຸ.

**ມາດຕາ 44 ການຟື້ນຟູ ແລະ ການອະນຸລັກ ສະກຸນຊ່າງວິຈິດສິນ**

ການຟື້ນຟູ ແລະ ການອະນຸລັກ ສະກຸນຊ່າງວິຈິດສິນ ແມ່ນການປົກປັກຮັກສາ, ການສົ່ງເສີມ ດ້ານວິຈິດສິນ ແລະ ເສີມຂະຫຍາຍພູມປັນຍາສະກຸນຊ່າງວິຈິດສິນລາວ ໃຫ້ມີຄວາມຍືນຍົງ, ອຸດົມສົມບູນ ແລະ ຮັ່ງມີຂຶ້ນ ເພື່ອຊຸກຍູ້ ແລະ ສົ່ງເສີມ ການສຶກສາຄົ້ນຄວ້າ, ຊອກຮູ້ຄຸນຄ່າທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ກ່ຽວກັບວິຈິດສິນ ທີ່ເປັນພື້ນຖານໃຫ້ແກ່ສະກຸນຊ່າງວິຈິດສິນລາວ ບໍ່ໃຫ້ເສື່ອມໂຊມ, ເສຍຫາຍ ຫຼື ຖືກທຳລາຍ.

## ພາກທີ V
## ປະເພດ ແລະ ນາມມະຍົດ ສິລະປິນວິຈິດສິນ
## ໝວດທີ 1
## ປະເພດສິລະປິນວິຈິດສິນ

**ມາດຕາ 45 ປະເພດສິລະປິນວິຈິດສິນ**

ສິລະປິນວິຈິດສິນ ມີ ຫົກປະເພດ ດັ່ງນີ້ :

1. ຈິດຕະກອນ;
2. ປະຕິມາກອນ;
3. ສິລະປິນພາບພິມ;
4. ນັກນິເທດສິນ;
5. ນັກສະຖາປັດຕະຍະກຳສິນ;
6. ນັກຫັດຖະກຳສິນ.

ສິລະປິນວິຈິດສິນ ປະກອບດ້ວຍ ສິລະປິນວິຈິດສິນ ອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ.

**ມາດຕາ 46 ຈິດຕະກອນ**

ຈິດຕະກອນ ແມ່ນ ນັກແຕ້ມ ທີ່ແຕ້ມດ້ວຍ ສໍ, ສີນ້ຳ, ສີນ້ຳມັນ, ສີໂປສເຕີ, ສີອະຄຣີລິກ, ສໍຖ່ານຄາບອນ ແລະ ອຸປະກອນການແຕ້ມອື່ນ ລົງໃສ່ ເຈ້ຍ, ໄມ້ອັດ, ຜ້າແພ, ຝາ ຊຶ່ງຮູບແຕ້ມເຫຼົ່ານັ້ນ ມີຫຼາຍລັກສະນະ, ຫຼາຍຮູບແບບ ແລະ ເນື້ອໃນ ເຊັ່ນ ຮູບເໝືອນຄົນ, ຮູບສັດ, ຮູບສິ່ງວັດຖຸ, ຮູບທຳມະຊາດ, ຮູບຊີວິດປະຈຳວັນ ແລະ ຮູບປະກອບເລື່ອງ.

**ມາດຕາ 47 ປະຕິມາກອນ**

ປະຕິມາກອນ ແມ່ນ ນັກ ປັ້ນ, ແກະສະຫຼັກ, ຫຼໍ່, ຄວັດດ້ວຍວັດສະດຸຕ່າງໆ ເປັນຕົ້ນ ດິນໜຽວ, ຂີ້ເຜີ້ງ, ໄມ້, ຫີນ, ຫີນອ່ອນ, ປູນປຣາສເຕີ, ໂລຫະ ໃຫ້ເປັນຜົນງານດ້ານວິຈິດສິນ.

**ມາດຕາ 48 ສິລະປິນພາບພິມ**

ສິລະປິນພາບພິມ ແມ່ນ ນັກອອກແບບ ແລະ ແກະແບບ ເພື່ອພິມດ້ວຍ ນ້ຳມຶກ, ສີໂປສເຕີ, ສີອະຄຣີລິກ ແລະ ສີອື່ນ ລົງໃສ່ ເຈ້ຍ, ວັດສະດຸ ຫຼື ໂລຫະອື່ນ ໃຫ້ເປັນຜົນງານ ແລະ ຜະລິດຕະພັນສິນ.

**ມາດຕາ 49 ນັກນິເທດສິນ**

ນັກນິເທດສິນ ແມ່ນ ນັກອອກແບບງານສິນ ເພື່ອໂຄສະນາເຜີຍແຜ່ ໂດຍຜ່ານພາຫະນະສື່ມວນຊົນ ກ່ຽວກັບຜະລິດຕະພັນ, ສິນຄ້າ, ວັດຖຸ ແລະ ເຄື່ອງຂອງ ເປັນຕົ້ນ ນັກອອກແບບ ຜະລິດຕະພັນ, ສື່ສິ່ງພິມ, ສື່ໂຄສະນາ, ສື່ເອເລັກໂຕຣນິກ.

**ມາດຕາ 50 ນັກສະຖາປັດຕະຍະກຳສິນ**

ນັກສະຖາປັດຕະຍະກຳສິນ ແມ່ນ ນັກອອກແບບໂຄງສ້າງ ແລະ ການຕົບແຕ່ງ ສະຖາປັດຕະຍະກຳສິນ ຊຶ່ງປະກອບດ້ວຍໂຄງສ້າງ, ຮູບຊົງການຕົບແຕ່ງພາຍໃນ ແລະ ພາຍນອກ ຂອງຕຶກ, ອາຄານ, ສິມ, ກຸດຕິ, ຫໍແຈກ, ຫໍກອງ, ຫໍພະ, ປະຕູໂຂງ, ທາດ, ຫໍຫຼັກເມືອງ ທີ່ຕົບແຕ່ງດ້ວຍລວດລາຍສິນລະປະ ທີ່ມີລັກສະນະຊາດ ອັນປານີດວິຈິດບັນຈົງ.

**ມາດຕາ 51 ນັກຫັດຖະກຳສິນ**

ນັກຫັດຖະກຳສິນ ແມ່ນ ນັກສ້າງ ແລະ ປະດິດແຕ່ງ ຜະລິດຕະພັນຫັດຖະກຳ ທີ່ມີສີມືລະອຽດ ທີ່ເປັນເອກະລັກສະເພາະ ເປັນຕົ້ນ ເຄື່ອງຕົບແຕ່ງ, ເຄື່ອງໃຊ້ສອຍ, ເຄື່ອງນຸ່ງຫົ່ມ, ເຄື່ອງປະດັບ, ເຄື່ອງເອ້, ເຄື່ອງຈັກສານ.

**ມາດຕາ 52 ສິດ ແລະ ພັນທະ ຂອງສິລະປິນວິຈິດສິນ**

ສິລະປິນວິຈິດສິນ ມີ ສິດ ດັ່ງນີ້:

1. ສະເໜີພາບຕໍ່ໜ້າກົດໝາຍ ໃນການສຶກສາ, ຄົ້ນຄວ້າ, ວິໄຈ ເພື່ອຍົກລະດັບວິຊາສະເພາະດ້ານວິຈິດສິນ;
2. ປະດິດສ້າງ ແລະ ວາງສະແດງ ຜົນງານຂອງຕົນ ທີ່ຜ່ານການກວດກາ ແລະ ໄດ້ຮັບອະນຸຍາດ ຢ່າງຖືກຕ້ອງຕໍ່ສາທາລະນະຊົນ ລວມທັງການໂຄສະນາ ເຜີຍແຜ່ ຜ່ານສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ;

ເຄື່ອນໄຫວ, ດຳເນີນທຸລະກິດ ທາງດ້ານວິຈິດສິນ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

1. ມອບຜົນງານຜະລິດຕະພັນດ້ານວິຈິດສິນຂອງຕົນ ເພື່ອເປັນມໍລະດົກ ໃຫ້ແກ່ອົງການທີ່ກ່ຽວຂ້ອງ ຂອງລັດ ໃນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບວິຈິດສິນ;
2. ຖ່າຍທອດ ຄວາມຮູ້, ຄວາມສາມາດ, ບົດຮຽນ ແລະ ປະສົບການ ເພື່ອບຳລຸງ, ສ້າງ ສິລະປິນວິຈິດສິນຮຸ່ນສືບທອດ;
3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສິລະປິນວິຈິດສິນ ມີ ພັນທະ ດັ່ງນີ້:

1. ປົກປັກຮັກສາ, ອະນຸລັກ, ເສີມຂະຫຍາຍ ມູນເຊື້ອສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ;
2. ເຄົາລົບ ແລະ ປະຕິບັດ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບລິຂະສິດຂອງຜະລິດຕະພັນດ້ານວິຈິດສິນ;

ອ່ານຕໍ່ສະບັບໜ້າ




# ຄວາມຮັກໃນຜະຫຍາ

# ດົ້ນກົບເມກ

ນໍ້າຕ້ອງຕາດຄືນ້ອງແກວ່ງຫຼາ, ນໍ້າຕ້ອງຜາຄືນ້ອງແກວ່ງອື້ອ, ຟ້າຍິກຄົ້ວຄືນ້ອງຊິແກວ່ງແຂນ; ການຈີບສາວ, ລົມສາວໂດຍໃຊ້ຜະຫຍາປັນຍາ ຖືເປັນອາດການດໍາລົງຊີວິດແບບໜຶ່ງທີ່ເປັນເອກະລັກຄົນລາວໃນອະດີດ ເຖິງແມ່ນວ່າປັດຈຸບັນເຮົາບໍ່ໄດ້ເຮັດຄືອະດີດນັ້ນ ບໍ່ໝາຍວ່າ ອະດີດເຮົາຈະຂາດພູມປັນຍາ ຕ່າງແຕ່ວ່າຄົນບໍ່ສຶກສາຈຶ່ງບໍ່ຮູ້, ຄົນບໍ່ສຶກສາໃຫ້ເຖິງຖອງ ຈຶ່ງວ່າບໍ່ມີ... ເຮົາຈະເອົາບົດຮຽນລໍ້າຄ່າຈາກອະດີດມາໝູນໃຊ້ໃນປັດຈຸບັນ ແລະ ອະນາຄົດໄດ້ຫຼືບໍ່ທໍ່ນັ້ນ!

ການນໍາໃຊ້ຜະຫຍາເພື່ອເອົາຊະນະຈິດໃຈກັນລະຫວ່າງບ່າວ-ສາວນັ້ນຕ້ອງໄດ້ໃຊ້ສະຕິປັນຍາ ຕ້ອງໃຫ້ອີກຝ່າຍຍອມຈໍານົນໃນເຫດ ແລະ ຜົນ ເຊິ່ງບໍ່ຕ່າງກັບໝໍລໍາ ທີ່ລໍາໂຈດຖາມກັນຢູ່ເທິງເວທີ, ບ່າວ-ສາວ ທີ່ກ້ຽວກັນດ້ວຍຜະຫຍາກໍໄດ້ໃຊ້ຫຼາຍເຫດຜົນ ເພື່ອຊີງໃຈ-ສູ້ຢັນກັນດ້ວຍພູມປັນຍາເຊັ່ນ: ຜະຫຍາທີ່ຖາມຕອກຢໍ້າຈິດໃຈອີກຝ່າຍ ເພື່ອໃຫ້ແນ່ໃຈກັບລົມປາກທີ່ເວົ້າອອກມາວ່າ: ລົມພານຕ້ອງ ຕອງແກຢ້ານບໍ່ແນ່ ລົມພານຕ້ອງ ຕອງແຕ້ແນ່ບໍ່ນໍ?

ຄວາມຮັກຈາກພູມປັນຍາທີ່ໃຊ້ຜະຫຍາໂຕ້ຕອບ ລະຫວ່າງບ່າວ-ສາວ ມີຫຼາຍເຫດຜົນ ຂຶ້ນຢູ່ກັບປະຕິພານ ໄຫວພິບ ຂອງແຕ່ລະຄົນ ເຊັ່ນຜູ້ຍິງເວົ້າແກ້ຜູ້ບ່າວວ່າ: ອັນວ່າເຄືອບຸ່ນກ້ຽວ ເຄືອຫວາຍຊໍ້າພັດເນົ່າ ອັນວ່າຊູ້ເກົ່ານ້ອງ ທາງບ້ານກໍບໍ່ມີ ດອກນາ!

ການເອົາທໍາມະຊາດມາປຽບທຽບອາລົມຮັກ ຖືເປັນເລື່ອງ ດີເລີດ-ເຫັນແຈ້ງໄດ້ງ່າຍ ເຊິ່ງບາງກໍລະນີ ຍິ່ງໃຫຍ່ເໜືອຈິງ ແຕ່ ມັນກໍບົ່ງບອກແນວຄິດອາລົມຄວາມຮັກທີ່ມີຕໍ່ກັນໄດ້ດີເຊັ່ນ:

ພີ່ຢາກຫຍໍ້ແມ່ນໍ້າໃຫ້ເປັນແຜ່ນດິນດຽວ; ຄາວສິບຄືນຊາວຄືນຢາກຫຍໍ້ເປັນຄາວມື້! ຄັນນ້ອງບໍ່ໄດ້ອ້າຍ ຕາຍໄປຊິບໍ່ເກີດ, ຊິສະເດີດຂຶ້ນຟ້າ ເມືອຖ້າຢູ່ສະຫວັນ.

ການໃຊ້ຜະຫຍາຈີບ-ກ້ຽວສາວ ເພື່ອສະແດງຄວາມຮັກ ຖືເປັນການຊີ້ບອກຄວາມສະຫຼາດ, ພູມປັນຍາໃນແຕ່ລະຄົນ ເຊິ່ງກວ່າຈະໄດ້ໃຈກັນ ຫຼື ໄດ້ຄວາມຮັກຈາກອີກຝ່າຍກໍບໍ່ແມ່ນເລື່ອງງ່າຍ, ການຕໍ່ຍອດ-ສືບທອດປັນຍາຈາກອະດີດ ຈຶ່ງບໍ່ຄວນຖືເບົາ ສົມຄວນຄົ້ນຄວ້າສຶກສາໃຫ້ເລິກເຊິ່ງ...?



# ສື່ມວນຊົນ

ຮຽບຮຽງໂດຍ: ດອກຫຍ້າ



ສື່ມວນຊົນ ເປັນຜູ້ປະຕິບັດໜ້າທີ່ເປັນສື່ກາງໃນການເກັບກໍາ ແລະ ສະໜອງຂໍ້ມູນຂ່າວສານລະຫວ່າງປະຊາຊົນກັບປະຊາຊົນ ແລະ ສະໜອງຂໍ້ມູນລະຫວ່າງປະຊາຊົນ ກັບອົງການນໍາຂອງປະເທດ.

ສື່ມວນຊົນ ມີບົດບາດພົວພັນທົ່ວສັງຄົມ ເພາະເປັນອົງການໜຶ່ງທີ່ເຮັດວຽກດ້ານການເມືອງ-ແນວຄິດ ເຊິ່ງເປັນວຽກງານໂຄງບົນຂອງສັງຄົມ ໂດຍເຮັດວຽກນໍາພາແນວຄິດ, ນໍາພາທາງສຽງຂອງສັງຄົມ ໄປຕາມທິດທາງຂອງການນໍາພາສູງສຸດຂອງປະເທດ ແລະ ສາມາດຊວນເຊື່ອສັງຄົມໃຫ້ເຂົ້າໃຈ ແລະ ປະຕິບັດຕາມ; ສະນັ້ນ, ຝ່າຍຕາເວັນຕົກຈຶ່ງເຄີຍຂະໜານນາມໃຫ້ສື່ມວນຊົນວ່າ "ເປັນອໍານາດທີສີ່" (ບໍລິຫານ, ນິຕິບັນຍັດ, ຕຸລາການ ແລະ ສື່ມວນຊົນ)

ສື່ມວນຊົນ ມີບົດບາດເປັນອາວຸດແຫຼມຄົມຂອງພັກ-ລັດ ໃນການໂຄສະນາເຜີຍແຜ່ແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ໃນການສຶກສາອົບຮົມທາງດ້ານການເມືອງແນວຄິດແກ່ສັງຄົມ, ປຸກລະດົມມະຫາຊົນ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດຄື ປົກປັກຮັກສາ ແລະ ສ້າງສາປະເທດຊາດ, ພັດທະນາເສດຖະກິດ-ສັງຄົມ ຕາມແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼາຍຫຼັກການຂອງພັກ, ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ, ສ້າງປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສູ່ສັງຄົມເທື່ອລະກ້າວ; ເປັນເວທີໃນການສະແດງຄວາມຄິດເຫັນ, ການສະແດງທັດສະນະແບບສ້າງສັນຕໍ່ບັນຫາຕ່າງໆ; ເປັນສາຍໄຍຜູກພັນລະຫວ່າງມະຫາຊົນກັບພັກ-ລັດ; ເປັນພາກສ່ວນສໍາຄັນໃນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ແລະ ການຕອບຕ້ານຖ້ອຍທໍານອງໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງກຸ່ມຄົນບໍ່ດີຕໍ່ຊາດ; ເປັນເວທີແຫ່ງການບັນເທີງ ແລະ ໃຫ້ຄວາມຮູ້ທີ່ເປັນປະໂຫຍດແກ່ສັງຄົມຢ່າງກວ້າງຂວາງ.

ພ້ອມນັ້ນ, ຍັງມີບົດບາດໃນການຕອບສະໜອງຂໍ້ມູນ-ຂ່າວສານແກ່ສັງຄົມ ເພື່ອເປັນການປຸກລະດົມສັງຄົມໃຫ້ປະຊາຊົນມີຄວາມຮັບຮູ້, ເຂົ້າໃຈ, ຂະຫຍັນຂັນແຂງ ແລະ ກະຕືລືລົ້ນ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຢ່າງເປັນຂະບວນການ ແລະ ເປັນເອກະພາບໃນທົ່ວປະເທດ; ບົດບາດໃນການພັດທະນາຄວາມຮູ້ຄວາມສາມາດໃຫ້ປະຊາຊົນ, ສ້າງທັດສະນະຄະຕິທີ່ດີໃນການພັດທະນາສັງຄົມ, ສ່ອງແສງຄວາມເປັນຈິງໃນສັງຄົມ ເພື່ອຮັກສາສິ່ງທີ່ດີ ແລະ ກໍາຈັດສິ່ງທີ່ບໍ່ດີ; ບົດບາດໃນການຕໍານິວິຈານສັງຄົມ ທັງເປັນເວທີສະແດງຄວາມຄິດຄວາມເຫັນ ແລະ ໃຫ້ຄວາມບັນເທີງແກ່ມະຫາຊົນ.

**ຄັດຈາກປຶ້ມຄູ່ມືນັກຂ່າວວິຊາສື່ສິ່ງພິມ (ສໍາລັບການຮຽນ-ການສອນ).**



# ຂຽນຄໍາລາວໃຫ້ຖືກ

#ຄູແສງ

ຄໍາຖືກ-ຄໍາຜິດ ທີ່ກ່ຽວຂ້ອງກັບຄໍາເຊິ່ງມີພະຍາງໜ້າສະກົດດ້ວຍສະຫຼະ xະ.

| ຄໍາຖືກ | ຄໍາຜິດ |
|---|---|
| ອະດີດ | ອາດີດ |
| ອະນາຄົດ | ອານະຄົດ |
| ອະນາໄມ | ອານະໄມ |
| ອະນຸບານ | ອານຸບານ |
| ອະນຸວົງ | ອານຸວົງ |
| ອະມະຕະ | ອາມະຕະ |
| ອະໄພ | ອາໄພ |
| ອະຄະຕິ | ອັກຄະຕິ |




# ວິທີເຮັດວຽກ

## ພາກທີ 4

## ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

**4. ກ່ຽວກັບສະມາຊິກຂອງພັກຊະນິດຕ່າງໆ:**

ພັກຂອງເຮົາ ແມ່ນພັກປະຕິວັດ, ແມ່ນພັກທີ່ເຮັດວຽກເພື່ອປະຊາຊົນ, ເພື່ອປະເທດຊາດບ້ານເມືອງ ພັກຂອງເຮົາມີສະມາຊິກເປັນຈໍານວນມາກມາຍຫຼາຍ, ສ່ວນຫຼາຍແມ່ນເຂົ້າໃຈຄັກວ່າ ຕົນເຂົ້າພັກ ແມ່ນເພື່ອປະຊາຊົນ ແລະ ເພື່ອປະເທດຊາດ, ເປັນທໍາມະດາຢູ່ແລ້ວ. ແຕ່ມັນກໍມີຄົນສ່ວນໜຶ່ງ ເຂົ້າພັກນໍາໝູ່ເພື່ອຜົນປະໂຫຍດແນວອື່ນ ຍົກຕົວຢ່າງຄື: ບາງຄົນຄິດວ່າເຂົ້າພັກ ເພື່ອຊອກວຽກເຮັດງານທໍາ, ບາງຄົນເຂົ້າພັກ ຫວັງຈະເອົາຕໍາແໜ່ງໜ້າທີ່ຊັ້ນນັ້ນ, ຊັ້ນນີ້, ບາງຄົນເຂົ້າພັກ ຍ້ອນພີ່ນ້ອງເພື່ອນຝູງແກ່ດຶງເຂົ້າ ແລະ ອື່ນໆອີກ. ຄົນຈໍາພວກນີ້ ບໍ່ຮູ້ວ່າການປະຕິວັດແມ່ນພາລະໜ້າທີ່ອັນທຸກຍາກລໍາບາກ, ຕ້ອງມີນໍ້າໃຈເດັດດ່ຽວ, ນໍ້າໃຈເສຍສະຫຼະອັນແທ້ຈິງ ຈຶ່ງຈະເຮັດໄດ້. ດັ່ງນັ້ນ, ເມື່ອພົບຄວາມຫຍຸ້ງຍາກລໍາບາກ, ຕ້ອງມີນໍ້າໃຈເສຍສະຫຼະອັນແທ້ຈິງ ຈຶ່ງຈະເຮັດໄດ້. ດັ່ງນັ້ນ, ເມື່ອພົບຄວາມຫຍຸ້ງຍາກລໍາບາກ ຄົນພວກນີ້ ກໍມັກເບື່ອໜ່າຍ ຢ້ານກົວ ກະວົນກະວາຍ.

ເຖິງຢ່າງໃດກໍຕາມ ເຂົາເຈົ້າເຊື່ອພັກເຮົາ, ເຂົາເຈົ້ານັບຖືພັກເຮົາ, ເຂົາເຈົ້າຊອກເຂົ້າພັກເຮົາ ດັ່ງນັ້ນ, ກໍເປັນການດີແລ້ວ, ນອກຈາກພວກທີ່ເຂົ້າພັກເຮົາ ເພື່ອຫວັງມ້າງເພພາຍໃນນັ້ນແລ້ວ, ພວກເຂົ້າພັກເຮົາແນວນັ້ນ ພວກເຮົາກໍຊິມເຊີຍ, ເມື່ອເຂົາເຈົ້າມານໍາພັກເຮົາແລ້ວ ພັກເຮົາກໍຕ້ອງດັດແປງແກ້ໄຂເອົາເຂົາເຈົ້າ, ອົບຮົມສັ່ງສອນເຂົາເຈົ້າ, ຍົກລະດັບຄວາມຮູ້ຄວາມເຂົ້າໃຈ ແລະ ນໍ້າໃຈຮັບຜິດຊອບຂອງເຂົາເຈົ້າ ໃຫ້ເຂົາເຈົ້າຄ່ອຍໆກາຍເປັນຄົນດີໄດ້ ຜ່ານການຮໍ່າຮຽນ ແລະ ການຕໍ່ສູ້ອັນຍາວນານຂອງເຂົາເຈົ້າ ກໍກາຍເປັນນັກຮົບທີ່ດີໄດ້..

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍຫາຍໂຣຄາ

# ສັນຍານເຕືອນ

# ບົງເອີນ



ປັດຈຸບັນ, ສື່ອອນລາຍໄດ້ກາຍເປັນປັດໃຈໜຶ່ງ ທີ່ເພີ່ມເຂົ້າມາໃນຊີວິດປະຈຳວັນຂອງທຸກໆຄົນ ບໍ່ວ່າຈະເປັນເດັກນ້ອຍ ຫຼື ຜູ້ໃຫຍ່ ສະນັ້ນ, ພຶດຕິກຳໃນການໃຊ້ຊີວິດຂອງຄົນເຮົາ ຈຶ່ງມີການປ່ຽນແປງ ມີການເສບຕິດຈໍ, ເສບຕິດການໃຊ້ສື່ໃນໂທລະສັບ ຫຼື ຄອມພິວເຕີຫຼາຍຂຶ້ນ ເຊິ່ງອຸປະກອນເຫຼົ່ານີ້ເຮັດໃຫ້ສາມາດເຂົ້າເຖິງຂໍ້ມູນຕ່າງໆໄດ້ຢ່າງງ່າຍດາຍ ແລະ ວ່ອງໄວ ເຊິ່ງລວມເຖິງສື່ສັງຄົມ ເຊັ່ນ Facebook, Twitter, Instagram ແລະ ອື່ນ ເພາະມັນມີຄວາມສະດວກສະບາຍທີ່ຈະເຂົ້າເຖິງຂໍ້ມູນຕ່າງໆໄດ້ຫຼາຍ ຈຶ່ງເຮັດໃຫ້ມີຄວາມສ່ຽງເພີ່ມຂຶ້ນ ທີ່ຄົນເຮົາຈະເສບຕິດກັບສື່ເຫຼົ່ານີ້ ໂດຍສະເພາະແມ່ນເຍົາວະຊົນ ເພາະວ່າເຂົ້າເຖິງໄດ້ໄວ ສາມາດຕອບສະໜອງຕາມຄວາມຕ້ອງການ ໃນການໃຊ້ຊີວິດໃນປະຈຸບັນໄດ້ ແຕ່ເຖິງຢ່າງໃດກໍຕາມ ບໍ່ໄດ້ໝາຍຄວາມວ່າຄົນທີ່ມີສະມາດໂຟນຢູ່ໃນມືຈະເສບຕິດສື່ອອນລາຍທັງໝົດ ມັນຂຶ້ນຢູ່ກັບການຕັດສິນໃຈຂອງບຸກຄົນ ລວມທັງການສຶກສາອົບຮົມເພື່ອສ້າງລະບຽບວິໄນໃນການນຳໃຊ້ອິນເຕີເນັດຂອງພໍ່ແມ່ແກ່ເດັກຕາມຄວາມເໝາະສົມ.

**6 ສັນຍານຂອງການຕິດສື່ສັງຄົມ/ການຕິດສື່ສັງຄົມອອນລາຍ**

- ຢູ່ໃນສື່ສັງຄົມອອນລາຍ ເປັນເວລາຫຼາຍຊົ່ວໂມງຕິດຕໍ່ກັນ;
- ຈັບໂທລະສັບ ແລະ ເປີດເວັບ ຫຼື ຄລິບວີດີໂອຕະຫຼອດເວລາ ບໍ່ວ່າຈະເຮັດຫຍັງຢູ່ກໍຕາມ;
- ເມື່ອບໍ່ໄດ້ໃຊ້ສື່ເຫຼົ່ານີ້ ຈະຮູ້ສຶກຫງຸດຫງິດ, ໃຈຮ້າຍ ແລະ ໂມໂຫງ່າຍ;
- ພະຍາຍາມທີ່ຈະຄວບຄຸມການເຂົ້າເຖິງສື່ສັງຄົມອອນລາຍ ແຕ່ບໍ່ສາມາດຄວບຄຸມໄດ້;
- ມັກໃຊ້ສື່ສັງຄົມອອນລາຍເພື່ອຜ່ອນຄາຍຄວາມຕຶງຄຽດ.
- ສຳລັບເດັກນ້ອຍ ຫຼື ໄວລຸ້ນໃນໄວຮຽນ ຈະມີພຶດຕິກຳມັກຢູ່ໃນຫ້ອງ ແລະ ອາດມີພຶດຕິກຳຂີ້ຕົວະ ຫຼື ປິດບັງ ເພື່ອທີ່ຈະໄດ້ຫຼິ້ນສື່ສັງຄົມຫຼາຍຂຶ້ນ.

ສັນຍານເຫຼົ່ານີ້ ເປັນການເຕືອນວ່າ ສື່ສັງຄົມອອນລາຍໄດ້ເຂົ້າມາຄອບງຳຊີວິດປະຈຳວັນ. ແລະ ຖ້າໃຊ້ບໍ່ຖືກຕ້ອງເໝາະສົມອາດສົ່ງຜົນບໍ່ດີຕໍ່ກັບຮຽນການ, ບ່ອນເຮັດວຽກ, ບັນຫາກັບໝູ່ເພື່ອນຄົນຮອບຂ້າງ ແລະ ຄອບຄົວ ຫຼືບາງຄັ້ງມັນສາມາດກໍ່ໃຫ້ເກີດພະຍາດທາງຈິດໄດ້ເຊັ່ນກັນ ຮ້າຍແຮງກວ່ານັ້ນອາດພາໃຫ້ເກີດບັນຫາອາດຊະຍາກຳ, ຄວາມຮຸນແຮງທາງເພດ.... ບາງເຫດການເຫຼົ່ານີ້ອາດເກີດຈາກການຕິດເກມຂອງເດັກນ້ອຍ, ເສບຕິດສື່ອອນລາຍ ເພາະວ່າເຫັນຕົວຢ່າງ ຫຼື ພຶດຕິກຳກະຕຸ້ນທີ່ບໍ່ຖືກຕ້ອງເໝາະສົມ ເນື່ອງຈາກບໍ່ໄດ້ຮັບການຄວບຄຸມດູແລ ແລະ ຄຳແນະນຳຈາກພໍ່ແມ່ ຫຼື ຜູ້ທີ່ຢູ່ອ້ອມຂ້າງໃນທາງທີ່ເໝາະສົມ ແລະ ຄວນຈະເປັນ.

ອາດ ກະວີລາວ

# ນ້ຳນອງ ນ້ຳໃຈ

# ສາວຖູ ວົງຄົກລິ່ນ

❊ ຝົນຖອກເທທັ່ງລົ້ນ
ວາລີໄຫຼເລີຍລົງ
ຫຼາຍວັນ ຝົນຍອຍຍ້ອຍ
ເຄຫາ ເຮືອນຮ່ອມທ້ອງ

ຜືນແຜ່ນທໍລະນີ
ບ່ອນບວມດິນຄ້ອຍ
ສາຍທາລາລິນລ່ອງ
ຈົມພື້ນແມ່ນະທີ ພຸ້ນແລ້ວ

❊ ເບິ່ງແມ ແມ່ອາໂປດ່ວນຟ້າ
ແຖວຖະໜົນເຄີຍທຽວ
ມີທັງຂອນລຳໄມ້
ຫຼົງຢູ່ເຮືອສ່ອງຈ້ອງ

ເຮວຮີບເປັນແລວ
ປ່ຽນເປັນວັງນ້ຳ
ລອຍມາເປັນໝູ່
ໃຈນີ້ສັ່ນເຊັນ ແທ້ເດ!

❊ ເຫັນເຄຫາຂອດຂ້າງ
ອຸກອຸລາຍາມມອງ
ໄພພິບັດມາໂຮມເຂົ້າ
ນ້ຳປ່າໄຫຼຫຼາກລົ້ນ

ພຽງແຕ່ຫຼັງຄາ
ປວດໃຈຊຶມເສົ້າ
ປວງຊົນເຮົາເສຍທ່າ
ຈົນໜີພົ້ນບໍ່ເປັນ ນັ້ນແລ້ວ

❊ ແສນເສຍດາຍບ່ອນບ້ານ
ເຂົ້າຂອງ ເງິນຄຳສູນ
ສັດລ້ຽງ ງົວຄວາຍແບ້
ທົ່ງນາ ກາຍມາເປັນວັງແມ່ນ້ຳ

ຖານຖິ່ນເຄີຍເຊົາ
ວອດວາຍຫາຍກ້ຽງ
ລອຍຕາມກະແສທັ່ງ
ຍາວກວ້າງຊົ່ວຕາ ທ່ານເອີຍ

❊ ບາງຜ່ອງ ເສຍພຶດກ້າ
ພັດພາກ ເຮືອນເຄຫາ
ບາງຄົນ ຫຼົງເຫຼືອໄວ້
ນ້ຳໄຫຼ ເວີນເວີ່ນເຂົ້າ

ແນວໜໍ່ສາຍພັນ
ເຜົ່າພົງພັນເຊື້ອ
ທໍເຮືອນຫຼັງເກົ່າ
ຮົນໄຫ້ຮ່ຳໄຮ ເຫຼືອໃຈເດ

❊ ສົ່ງແຮງໃຈ ຝາກຕ້ອນ
ເອົາກະວີເປັນກຳລັງ
ຊາວລາວ ເໜືອກາງໃຕ້
ຂໍໃຫ້ ພົງພີ່ນ້ອງ

ຊູຊ່ວຍບັນເທົາ ແດ່ນາ
ຫອບໂຈມໂຊມໄວ້
ໂຮມດວງໃຈສານຕໍ່
ຊາວເມືອງພົ້ນຜ່ານໄພ ນີ້ທ້ອນ!






## ຫັກຫາຍ ລະບາຍ

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)**

# ສາວຈົ້ມ

❊ **ຂໍເປັນກຳລັງໃຈ** ໃຫ້ພໍ່ແມ່ປະຊາຊົນລາວ**ບັນດາເຜົ່າ** ໃນຂອບເຂດທົ່ວປະເທດ ທີ່ໄດ້ຮັບ**ຜົນກະທົບ**ຈາກເຫດການ**ນ້ຳຖ້ວມ** ຢູ່ຫຼາຍພື້ນທີ່ ພາໃຫ້ເກີດມີຄວາມ**ເສຍຫາຍຫຼາຍສົມຄວນ** ຈຶ່ງຂໍຊຽນຊ່າວຂໍ້ຄວາມສົ່ງມາຫາ **ພໍ່ແມ່ປວງປະຊາ** ທົ່ວຫາບິນຄອ້ນຂໍຈົ່ງອົດທົນສູ້ ກັບອຸປະສັກຍິ່ງໃຫຍ່ **ຂໍໃຫ້ໄພຜ່ານພົ້ນ** ລາວທຸກຄົນ**ຊ່ວຍຊ້ອນ** ໃຫ້ລາວພົ້ນຜ່ານໄພ **ທ່ານເອີຍ!**

❊ **ວັນສື່ມວນຊົນ**ແຫ່ງຊາດ (**13 ສິງຫາ 1950-13 ສິງຫາ 2023**) ໄດ້ໝູນວຽນບັນຈົບຄົບຮອບ **73 ປີ** ແລະ **ວັນລັດຖະທຳມະນູນ** ແຫ່ງ ສປປລາວ ກ້າວມາຄົບຮອບ **32 ປີ (15 ສິງຫາ 1991-15 ສິງຫາ 2023)** ຕາມຍິນຂ່າວຫຼາຍພາກສ່ວນຈະມີການສະເຫຼີມສະຫຼອງ ບາງຜ່ອງຈັດປາຖະກະຖາ ເພື່ອ**ໂຄສະນາ 2 ວັນດັ່ງກ່າວ** ເພື່ອໃຫ້ປະຊາຊົນລາວບັນດາເຜົ່າ **ຮັບຮູ້ ແລະ ເຂົ້າໃຈ**ກັບຢ່າງທົ່ວເຖິງ **ຊົມເຊີຍ!**

## ຊວນຍິ້ມ

# ແອ່ບຕຸ້ງ

**ສ່ຽວຮັກສ່ຽວແພງ**

ທ້າວເອບ ກັບທ້າວແອ ໄປທ່ຽວປ່າ ບັງເອີນພໍ້ເສືອໂຕໜຶ່ງ, ທ້າວແອ ຄ່ອຍໆກົ້ມລົງປົດເກີບ ເອບ ທຽວເຫັນຈຶ່ງຖາມວ່າ:

+ ມຶງຄິດວ່າປົດເກີບແລ້ວຊິແລ່ນໄວກວ່າເສືອວ່າຕີ?
- ບໍ່
+ ແລ້ວມຶງຊິປົດເຮັດຫຍັງ
- ປົດເພື່ອໃຫ້ແລ່ນໄວກວ່າມຶງ

!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ເຫັນຄົນທຸກຢ່າຟ້າວຫາບ
ເຫັນຄົນມາບຢ່າຟ້າວຫ້ອງ




# ກົດເກນ - ຫຼັກເກນ ມາດຕະເກນ

"ກົດເກນ", "ຫຼັກເກນ" ແລະ "ມາດຕະເກນ" ເປັນສາມຄຳທີ່ມີຄຳວ່າ "ເກນ" ຢູ່ທ້າຍ ແລະມີຄວາມໝາຍຕ່າງກັນດັ່ງນີ້:

"ກົດເກນ" ເປັນຄຳປະສົມປະເພດຄຳນາມ ປະກອບດ້ວຍຄຳວ່າ "ກົດ" ຈາກເຄົ້າຂະແມ **កត់** ໝາຍເຖິງ "ຂໍ້ກຳນົດທີ່ຕ້ອງປະຕິບັດຕາມ" ແລະ "ເກນ" ຈາກເຄົ້າຂະແມ **កត់** ໝາຍເຖິງ "ຫຼັກທີ່ກຳນົດ ຫຼືວິນິໄສໄວ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ ກົດເກນ ກໍໝາຍເຖິງ "ຂໍ້ກຳນົດທີ່ວາງໄວ້ເປັນຫຼັກເປັນເກນ" ເຊັ່ນ

- ການເຮັດວຽກຕ້ອງເປັນໄປຕາມກົດເກນທີ່ບໍລິສັດກຳນົດ.

ນອກຈາກນັ້ນ, "ກົດເກນ" ຍັງໝາຍເຖິງ "ຫຼັກທີ່ເປັນລະບົບມາດຕະຖານ ເຊິ່ງບັງຄັບອັນອື່ນໃຫ້ເປັນໄປຕາມຢ່າງຫຼີກລ່ຽງບໍ່ໄດ້" ເຊັ່ນ

- ທຸກຢ່າງໃນໂລກນີ້ຕ້ອງເປັນໄປຕາມກົດເກນທຳມະຊາດ ດັ່ງ ເກີດ ແກ່ ເຈັບ ຕາຍ ເປັນກົດເກນທຳມະຊາດ ທີ່ຄົນເຮົາຫຼືສັດບໍ່ສາມາດຫຼີກລ່ຽງໄດ້.
- ລາຄາສິນຄ້າຂຶ້ນລົງແມ່ນເປັນໄປຕາມກົດເກນເສດຖະກິດຕະຫຼາດ.

ສ່ວນຢູ່ໃນວິຊາປັດຊະຍາ "ກົດເກນ" ໝາຍເຖິງ "ການພົວພັນທາດແທ້, ແນ່ນອນ, ແພ່ຫຼາຍ ແລະຊໍ້າໄປຊໍ້າມາຂອງບັນດາສິ່ງວັດຖຸ ແລະປາກົດການ" ເຊັ່ນ

- ກົດເກນຕ່າງໆຂອງວິທີສັດຈະວິພາກວັດຖຸນິຍົມ ເຊິ່ງປະກອບດ້ວຍ 3 ກົດເກນ ຄື ກົດເກນວ່າດ້ວຍຄວາມເປັນເອກະພາບ ແລະຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມ, ກົດເກນການຫັນປ່ຽນຈາກປະລິມານກາຍເປັນຄຸນນະພາບ ແລະກົງກັນຂ້າມ ແລະ ກົດເກນປະຕິເສດຊ້ອນປະຕິເສດ.

"ຫຼັກເກນ" ເປັນຄຳປະສົມປະເພດຄຳນາມ ປະກອບດ້ວຍຄຳວ່າ "ຫຼັກ" ໝາຍເຖິງ "ແນວທາງ, ລະບຽບ, ຂໍ້ກຳນົດ" ແລະ "ເກນ" ຈາກເຄົ້າຂະແມ **កេណ្ឌ** ໝາຍເຖິງ "ຫຼັກທີ່ກຳນົດໄວ້, ຂໍ້ບັງຄັບ". ເມື່ອສອງຄຳນີ້ປະກອບເຂົ້າກັນເປັນ "ຫຼັກເກນ" ກໍໄດ້ຄວາມໝາຍວ່າ "ຫຼັກທີ່ກຳນົດໄວ້ເພື່ອໃຊ້ວິນິດໄສ ແລະປະຕິບັດຕາມ" ເຊັ່ນ

- ໃນວິຊາຄະນິດສາດ ຊັ້ນ ມ4 ນັກຮຽນທຸກຄົນຕ້ອງໄດ້ຮຽນຫຼັກເກນຊິນ ແລະ ຫຼັກເກນໂກຊິນ.
- ເວລາຮຽນຄະນິດສາດ ເຮົາຕ້ອງທຳຄວາມເຂົ້າໃຈຫຼັກເກນ ແລະຮູ້ພິສູດບັນດາສູດຂອງສັງຄະນິດບໍ່ກຳນົດໃຫ້ໄດ້.
- ດອກເບ້ຍ ແມ່ນຄ່າຕອບແທນໃນການຢືມເງິນ. ໃນວິຊາເສດຖະສາດ ດອກເບ້ຍ ແມ່ນລາຄາຂອງເງິນເຊິ່ງຂຶ້ນກັບຫຼັກເກນການສະໜອງແລະຄວາມຕ້ອງການ.
- ໜ້າທີ່ຫຼັກຂໍ້ໜຶ່ງຂອງຄະນະກຳມະການຄົ້ນຄວ້າພາສາລາວແມ່ນກຳນົດຫຼັກເກນໃນການນຳໃຊ້ພາສາລາວ ເປັນຕົ້ນການອ່ານ, ການຂຽນ, ວັດທະນະທຳການໃຊ້ພາສາລາວ...

"ມາດຕະເກ" ເປັນຄຳປະສົມປະເພດຄຳນາມ ປະກອບດ້ວຍຄຳວ່າ "ມາດຕະ" ມາຈາກຄຳປາລີ Matta (ມັດຕະ) ໝາຍເຖິງ "ປະລິມານ" ແລະ "ເກນ" ຈາກເຄົ້າຂະແມ **កេណ្ឌ** ໝາຍເຖິງ "ຫຼັກທີ່ກຳນົດໄວ້, ຂໍ້ບັງຄັບ". ເມື່ອສອງຄຳນີ້ປະກອບເຂົ້າກັນເປັນ "ມາດຕະເກນ" ເຊິ່ງໃນປຶ້ມແປສັບຍາກຂອງສຳນັກພິມຈຳໜ່າຍລາວຣັກຊາດ ປີ 1974 ໄດ້ບັນທຶກໄວ້ ແລະສະກົດເປັນ "ມາດເກນ" ພ້ອມໃຫ້ຄວາມໝາຍວ່າ "ຂອບເຂດຂອງການກຳນົດທີ່ເປັນຫຼັກແຫຼ່ງ".

ແຕ່ຢູ່ໃນວິຊາປັດຊະຍາ "ມາດຕະເກນ" ໝາຍເຖິງ "ບັນດາຄວາມສຳນຶກລວມທີ່ສຸດເຊິ່ງສ່ອງແສງເຖິງບັນດາດ້ານ,ລັກສະນະປະຈຳຕົວທີ່ມີມາແຕ່ເດີມ, ບັນດາການພົວພັນພື້ນຖານ ແລະແພ່ຫຼາຍທົ່ວໄປຂອງໂລກພາວະວິໄສ" ເຊັ່ນ

-ຄູ່ມາດຕະເກນຕ່າງໆຂອງວິທີສັດຈະວິພາກວັດຖຸນິຍົມມີ 6 ຄູ່ ຄື

1. ອັນລວມ ແລະອັນສະເພາະ
2. ສາເຫດ ແລະ ໝາກຜົນ
3. ເນື້ອໃນ ແລະ ຮູບການ
4. ທາດແທ້ ແລະ ປາກົດການ
5. ອັນແນ່ນອນ ແລະ ອັນບັງເອີນ
6. ຄວາມອາດສາມາດ ແລະຄວາມເປັນຈິງ




# ຜົນການເລືອກຕັ້ງສະພາແຫ່ງຊາດ ຊຸດທີ VII ຂອງກຳປູເຈຍ



ມີການລາຍງານຂ່າວໃຫ້ຮູ້ວ່າ: ອີງໃສ່ຜົນການນັບຄະແນນສຽງເລືອກຕັ້ງຢ່າງເປັນທາງການທີ່ຄະນະກຳມະການເລືອກຕັ້ງສະພາແຫ່ງຊາດກຳປູເຈຍໄດ້ເປີດເຜີຍໃຫ້ຮູ້ໃນວັນທີ 5 ສິງຫາຜ່ານມາວ່າ: ພັກປະຊາຊົນກຳປູເຈຍ ທີ່ເປັນພັກກຳອຳນາດປັດຈຸບັນ ໄດ້ຮັບໄຊຊະນະຢ່າງຂາດຂັ້ນໃນການເລືອກຕັ້ງທີ່ຈັດຂຶ້ນເມື່ອວັນທີ 23 ກໍລະກົດຜ່ານມາ ເຊິ່ງໄດ້ 120 ບ່ອນນັ່ງຈາກທັງໝົດ 125 ບ່ອນທີ່ໃນສະພາແຫ່ງຊາດ.

ຄະນະກຳມະການເລືອກຕັ້ງແຫ່ງຊາດກຳປູເຈຍໄດ້ປະກາດຜົນການເລືອກຕັ້ງສະພາແຫ່ງຊາດ ຊຸດທີ VII ໃນເບື້ອງຕົ້ນ ໃນວັນທີ 1 ສິງຫານີ້ ວ່າ ພັກປະຊາຊົນກຳປູເຈຍໄດ້ຄະແນນສຽງ 6.398.311 ຄະແນນ ໂດຍໄດ້ 120 ບ່ອນນັ່ງໃນຈຳນວນທັງໝົດ 125 ບ່ອນນັ່ງໃນລັດຖະສະພາ, ພັກພູນຊິນເປັກ ໄດ້ຄະແນນສຽງ 716.490 ຄະແນນ ໂດຍໄດ້ພຽງແຕ່ 5 ທີ່ນັ່ງໃນລັດຖະສະພາ.

ຄະນະກຳມະການເລືອກຕັ້ງຂອງກຳປູເຈຍ ຍັງໃຫ້ຮູ້ວ່າ: ມີຜູ້ມີສິດເລືອກຕັ້ງອອກມາໃຊ້ສິດລົງຄະແນນສຽງໃນການເລືອກຕັ້ງເມື່ອວັນທີ 23 ກໍລະກົດຜ່ານມາ ແຕ່ໃບລົງຄະແນນສຽງປະມານ 440.000 ຫຼື 1 ໃນ 18 ບັດແມ່ນບໍ່ຖືກຕ້ອງ ແຕ່ຄະນະກຳມະການເລືອກຕັ້ງກໍໃຫ້ຮູ້ວ່າ ຈຳນວນດັ່ງກ່າວ ຍັງໜ້ອຍກວ່າການເລືອກຕັ້ງໃນປີ 2018.

ທ່ານ ຮຸນແຊນ ນາຍົກລັດຖະມົນຕີກຳປູເຈຍຊຸດປັດຈຸບັນ ໄດ້ແຈ້ງໃຫ້ຮູ້ວ່າ: ສະພາແຫ່ງຊາດຊຸດໃໝ່ຈະຈັດກອງປະຊຸມຄັ້ງປະຖົມມະລຶກໃນວັນທີ 21 ສິງຫານີ້ ແລະ ວັນທີ 22 ສິງຫານີ້ ລັດຖະບານຊຸດໃໝ່ຈະສາບານຕົວຂຶ້ນຮັບຕຳແໜ່ງ. ຈາກນັ້ນ, ທ່ານ ຮຸນແຊນ ຈະບໍ່ດຳລົງຕຳແໜ່ງນາຍົກລັດຖະມົນຕີກຳປູເຈຍອີກຕໍ່ໄປ, ຂະນະທີ່ທ່ານ ຮຸນມາເນດ ຜູ້ຮັບສະໝັກເລືອກຕັ້ງນາຍົກລັດຖະມົນຕີກຳປູເຈຍທີ່ຂຶ້ນກັບພັກປະຊາຊົນກຳປູເຈຍ ກໍຈະນຳພາລັດຖະບານຊຸດໃໝ່.

# ຈີນ ປັບປຸງລະບຽບການໃບຢັ້ງຢືນພະລັງງານສີຂຽວ



ອີງຕາມການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ທ່ານຫວາງຕ້າເພີງຮອງຫົວໜ້າກົມພະລັງງານໃໝ່ ແລະ ພະລັງງານໝູນວຽນຂອງອົງການພະລັງງານແຫ່ງຊາດຈີນ ກ່າວວ່າ: ການບັນລຸການແຈກຢາຍໃບສີຂຽວຢ່າງທົ່ວເຖິງ ຈະເປັນການຄໍ້າປະກັນທີ່ແຂງແຮງຕໍ່ການນຳພາທົ່ວສັງຄົມໃນການບໍລິໂພກພະລັງງານໄຟຟ້າສີຂຽວ, ຮັບປະກັນການສະໜອງພະລັງງານຢ່າງປອດໄພ ເຊື່ອຖືໄດ້ ແລະ ຊຸກຍູ້ໃຫ້ເສດຖະກິດ-ສັງຄົມ ຫັນເປັນແບບກາກບອນຕໍ່າ ແລະ ການພັດທະນາດ້ວຍຄຸນນະພາບສູງ. ໃບສີຂຽວຖືກຖືເປັນບັດປະຈຳຕົວເອເລັກໂຕຣນິກຂອງບໍລິສັດໃນການຜະລິດພະລັງງານໄຟຟ້າສີຂຽວ, ໃບສີຂຽວໃບໜຶ່ງເທົ່າກັບປະລິມານໄຟຟ້າ 1.000 ກິໂລວັດໂມງ ທີ່ຜະລິດດ້ວຍພະລັງງານໝູນວຽນ.

ໂດຍອີງຕາມແຈ້ງການກ່ຽວກັບການປະຕິບັດລະບຽບການໃບຢັ້ງຢືນພະລັງງານໄຟຟ້າສີຂຽວທີ່ຜະລິດດ້ວຍພະລັງງານໝູນວຽນໃຫ້ທົ່ວເຖິງ, ຊຸກຍູ້ການບໍລິໂພກພະລັງງານໄຟຟ້າທີ່ຜະລິດດ້ວຍພະລັງງານໝູນວຽນ ທີ່ໄດ້ລົງພິມ ແລະ ເຜີຍແຜ່ກ່ອນໜ້ານີ້ ໂດຍລະບຸວ່າ: ຈະປັບປຸງລະບຽບການໃບຢັ້ງຢືນພະລັງງານສີຂຽວທີ່ຜະລິດດ້ວຍພະລັງງານໝູນວຽນ (ໃບສີຂຽວ) ໃຫ້ສົມບູນຂຶ້ນຕື່ມອີກ, ກຳນົດຂອບເຂດການນຳໃຊ້ໃບສີຂຽວ, ເຮັດໃຫ້ການແຈກຢາຍໃບສີຂຽວເປັນໄປຕາມລະບຽບແບບແຜນ, ເປີດກວ້າງການບໍລິໂພກພະລັງງານໄຟຟ້າສີຂຽວ ເພື່ອເຮັດໃຫ້ໃບສີຂຽວປົກຄຸມພະລັງານໄຟຟ້າທີ່ຜະລິດດ້ວຍພະລັງງານໝູນວຽນຢ່າງທົ່ວເຖິງ.

# ຟີລິບປິນ ໃຫ້ບຸລິມະສິດການຜະລິດສະບຽງອາຫານພາຍໃນປະເທດ



ອີງຕາມການລາຍງານໃຫ້ຮູ້ວ່າ: ທ່ານ ເຟີດິນານ ໂຣມູນເດັດສ ມາກ໋ອດ ຈູເນຍ ປະທານາທິບໍດີຟີລິບປິນ ໄດ້ຕີລາຄາສູງບັນດາຜົນງານຂອງລັດຖະບານໃນປີຜ່ານມາ ລວມທັງຄວາມພະຍາຍາມເພື່ອຕ້ານໄພເງິນເຟີ້ ແລະ ນຳເສດຖະກິດຄືນສູ່ການເຕີບໂຕ.

ຂ່າວລະບຸວ່າ: ທ່ານ ເຟີດິນານ ໂຣມູນເດັດສ ມາກ໋ອດ ຈູເນຍ ໄດ້ເນັ້ນໜັກເຖິງການເພີ່ມທະວີການຜະລິດກະສິກຳເພື່ອຄວບຄຸມໄພເງິນເຟີ້ ທັງຊີ້ແຈງວ່າ: ລັດຖະບານໄດ້ໃຊ້ມາດຕະການຮັກສາສະຖຽນລະພາບຂອງລາຄາສິນຄ້າທີ່ຈຳເປັນທັງໝົດ, ຄວາມພະຍາຍາມຄວບຄຸມໄພເງິນເຟີ້ແມ່ນພວມຢູ່ໃນເສັ້ນທາງທີ່ຖືກຕ້ອງ.

ເພື່ອຊ່ວຍຄວບຄຸມລາຄາຜູ້ບໍລິໂພກ, ທ່ານ ເຟີດິນານ ໂຣມູນເດັດສ ມາກ໋ອດ ຈູເນຍ ກ່າວວ່າ: ລັດຖະບານ ມີເປົ້າໝາຍເພີ່ມທະວີການຜະລິດສະບຽງອາຫານພາຍໃນປະເທດ ແລະ ເພີ່ມທະວີການສະໜອງຈາກການນຳເຂົ້າໃນທັນທີ. ນີ້ໝາຍຄວາມວ່າລັດຖະບານຈະໃຫ້ບຸລິມະສິດການພັດທະນາໃນຂະແໜງກະສິກຳທີ່ຖືກລະເລີຍເປັນໄລຍະເວລາຍາວນານ.

ທ່ານຢືນຢັນຄືນໃໝ່ຄຳໝັ້ນສັນຍາການລົງທຶນເຂົ້າໃນບັນດາເສັ້ນທາງ, ທ່າກຳປັ່ນ, ສະໜາມບິນ ແລະ ແຫຼ່ງນໍ້າ, ກຳນົດການໃຊ້ຈ່າຍງົບປະມານເຂົ້າໃນພື້ນຖານໂຄງລ່າງໃຫ້ທຽບເທົ່າ 6% ຂອງ GDP.

ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ, ທ່ານເນັ້ນໜັກເຖິງຄວາມຈຳເປັນໃນການຫັນປ່ຽນໄປໃຊ້ພະລັງງານທົດແທນ ແລະ ພະລັງງານປ່ອຍອາຍພິດຕໍ່າ, ເພື່ອແນໃສ່ກວມເອົາ 35% ຂອງຄວາມຕ້ອງການພະລັງງານຂອງປະເທດໃນປີ 2030 ແລະ 50% ໃນປີ 2040.




ເກີດມາລົບ ຢ່າໂທດ
ພໍ່-ແມ່ຜູ້ໃຫ້ກຳເນີດ

ເຝົ້າໄວ້ ໄດ້ບົດຮຽນ
❖ ວິເສດ ສະແຫວງສຶກສາ

# ຫຼັກຄ້ຳປະກັນຄວາມປອດໄພເວລາ ໄປ_ມາ ຕາມທ້ອງຖະໜົນ

ມື້ນີ້ຕັ້ງໃຈສະເໜີບາງບົດຮຽນໃນຕ່າງປະເທດ ກ່ຽວກັບມາດຕະການຄວບຄຸມຄວາມປອດໄພຕາມທ້ອງຖະໜົນສຳລັບຜູ້ຄົນທີ່ສັນຈອນໄປມາ. ເປັນເລື່ອງມະຍົກມະຍ່ອຍ ແຕ່ບໍ່ດ້ອຍຄ່າ ຖ້າຫາກລອງເອົາມາປະຕິບັດ. ຢູ່ **ຫວຽດນາມ** ເມື່ອປະມານ 5 ປີຜ່ານມາໄດ້ມີຂ່າວອ່າວແປກແຕ່ມີຄວາມຈິງ ຄື ບາງຊຸມຊົນຫວຽດນາມ ໄດ້ທົດລອງໃຫ້ຮ້ານກິນດື່ມ ໂດຍສະເພາະກໍແມ່ນຮ້ານກາຣາໂອເກະ, ຮ້ານເບຍ, ຮ້ານກິນແກ້ມແຊມສຸລາ ແຕ່ງຕັ້ງໜ່ວຍນຳສົ່ງລູກຄ້າຂີ້ເມົາໃຫ້ກັບຄືນຮອດເຮືອນດ້ວຍຄວາມປອດໄພ, ໝາຍຄວາມວ່າບໍ່ປ່ອຍໃຫ້ຜູ້ກ່ຽວກັບເຮືອນດ້ວຍຕົນເອງ. ຂ່າວບອກວ່າຢູ່ຮ້ານເຫຼົ່ານີ້ ຈະມີຊາຍສະກັນກ້າວກຶກ (ເພື່ອເອົາພວກຂີ້ເມົາໃຫ້ຢູ່) ໄດ້ເຮັດໜ້າທີ່ຕິດຕາມອາການເມົາຂອງລູກຄ້າ, ພໍຮອດຍາມກັບຢ້າວກັບເຮືອນແລ້ວ ພວກຊາຍສະກັນກໍຈະເຮັດໜ້າທີ່ນຳສົ່ງພວກຂີ້ເມົາ. ນີ້ກໍເປັນອີກວິທີໜຶ່ງທີ່ຮ້ານບັນເທີງ, ຮ້ານກິນດື່ມ ບ້ານເຮົາຄວນລອງເອົາມາປະຕິບັດ ໂດຍບໍ່ຈຳເປັນຕ້ອງໄດ້ເສຍຄ່າລິຂະສິດດອກ. ຢູ່**ປະເທດຍີ່ປຸ່ນ** ທາງການໄດ້ເອົາໃຈໃສ່ແກ້ໄຂບັນຫາ ຄົນເຖົ້າ (ເລີຍ 60 ປີ) ຂັບລົດດ້ວຍຕົນເອງ ເພາະວ່າສ່ຽງຈະເກີດອຸບັດເຫດ ຫຼາຍກວ່າຄົນໃນໄວທີ່ໜຸ່ມກວ່າ. ສະຖິຕິໃນປີ 2019 ໃຫ້ຮູ້ວ່າໃນຈຳນວນຜູ້ເຖົ້າໃນ 4 ຄົນໃດນັ້ນຈະມີ 1 ຄົນຍັງຂັບລົດໄປມາດ້ວຍຕົນເອງ. ໃນເດືອນເມສາ 2019 ຜູ້ເຖົ້າບຳນານ ອາຍຸ 87 ປີ ໄດ້ຂັບລົດຕຳ ເດັກຍິງ ອາຍຸ 3 ປີ ພ້ອມດ້ວຍຜູ້ເປັນແມ່ເສຍຊີວິດ. ນອກນັ້ນ, ຍັງເຮັດໃຫ້ມີຜູ້ບາດເຈັບອີກ 6 ຄົນ. ສ່ວນໃນເດືອນ ພຶດສະພາ ປີ 2018 ກໍມີກໍລະນີຜູ້ເຖົ້າອາຍຸ 90 ປີ ຂັບລົດລ່ວງໄຟແດງແລ້ວໄປຕຳເອົາຄົນຍ່າງ 4 ຄົນ ເຮັດໃຫ້ໜຶ່ງໃນນັ້ນ ເສຍຊີວິດ. ທາງການຍີ່ປຸ່ນ ໄດ້ສະຫຼຸບເລື່ອງນີ້ວ່າ ລະບົບຄວາມຈຳ, ພະລັງໃນການຊັ່ງຊາຂອງຄົນເຖົ້ານັ້ນຫຼຸດລົງ ຈຶ່ງບໍ່ສາມາດຄວບຄຸມພວງມາໄລລົດໄດ້ຢ່າງທັນການ ເມື່ອມີເຫດສຸກເສີນສະເພາະໜ້າ. ຢູ່ ປະເທດໄທ, ທາງການກ່ຽວຂ້ອງເອົາໃຈໃສ່ເປັນພິເສດ ກ່ຽວກັບສຸຂະພາບຂອງຜູ້ທີ່ຈະໄດ້ສິດກຳພວງມະໄລລົດ ໂດຍໄດ້ກຳນົດຕັດສິດຜູ້ທີ່ເປັນພະຍາດຫົວໃຈ, ພະຍາດສະໝອງ



ເສື່ອມ (ຫຼົງລືມ) ພະຍາດບ້າໝູ ແລະ ພະຍາດເບົາຫວານ ບໍ່ໃຫ້ບັນຊາພວງມະໄລລົດເປັນອັນເດັດຂາດ. ສ່ວນຜູ້ໄດ້ສິດຂັບລົດແລ້ວ ກໍຕ້ອງມີກຳນົດກວດສຸຂະພາບຢ່າງເປັນລະບົບ ເພາະເມື່ອອາຍຸຫຼາຍຂຶ້ນ ຫຼື ມີພະຍາດແຊກຊ້ອນ, ຄວາມສາມາດໃນການຂັບລົດກໍຈະຫຼຸດລົງ. ນອກຈາກນັ້ນ ຜູ້ທີ່ຄວາມບົກຜ່ອງທາງປະສາດຄວາມຮັບຮູ້ແລະຮ່າງກາຍກໍຈະບໍ່ໄດ້ຮັບອະນຸຍາດໃຫ້ຂັບລົດ. ແນ່ນອນມາດຕະຖານດ້ານສຸຂະພາບທີ່ກ່າວມານັ້ນ ລ້ວນແຕ່ເປັນຫຼັກການລວມທີ່ປະຕິບັດກັນໃນທຸກໆປະເທດ ຕ່າງແຕ່ວ່າການຄວບຄຸມນັ້ນມີລະດັບຫຼຸດໂຕນກັນ, ມີບ່ອນເຄັ່ງບ່ອນຍານ ດັ່ງນັ້ນ ຄວາມສ່ຽງເກີດອຸບັດເຫດຈຶ່ງມີໜ້ອຍຫຼາຍຕ່າງກັນ. ຢູ່ ສປ ຈີນ ນັ້ນ, ນອກຈາກກົດຈະລາຈອນລວມແລ້ວ ກໍຍັງມີລະບຽບການສະເພາະ ເພື່ອຄວບຄຸມລະບົບໂດຍສານແຕ່ລະປະເພດເຊັ່ນສຳລັບລົດໄຟໃຕ້ດິນນັ້ນ ກໍມີກົດລະບຽບພິເສດ. ສະຖິຕິ ອ່າວເກົ່າຄືໃນປີ 2019 ນັ້ນບອກວ່າ ໃນ 33 ຕົວເມືອງໃຫຍ່ໆຂອງ**ຈີນ**ນັ້ນ ມີລະບົບໂດຍສານລົດໄຟໃຕ້ດິນ ສ່ວນຈຳນວນຜູ້ໃຊ້ບໍລິການລະບົບໂດຍສານປະເພດນີ້ມີສູງເປັນອັນດັບທີ 2 ຂອງໂລກ ຮອງຈາກ ຍີ່ປຸ່ນ. ຂໍ້ຫ້າມສຳຄັນສຳລັບຜູ້ໂດຍສານທາງລົດໄຟໃຕ້ດິນລວມມີ: ຫ້າມເອົາອາຫານ ແລະເຄື່ອງດື່ມຕິດໂຕເຂົ້າໄປໃນລົດ ຍົກເວັ້ນຜູ້ທີ່ມີບັນຫາດ້ານສຸຂະພາບ ແລະ ເດັກນ້ອຍ, ຫ້າມຢືນ, ຫ້າມນັ່ງຕັ່ງທາງຂວາງ, ຫ້າມເປີດເພງ ຫຼື ເຄື່ອງສຽງດັງລົບກວນຄົນອື່ນ. ຂ່າວບອກວ່ານີ້ແມ່ນກົດລະບຽບລວມ ເພື່ອໃຫ້ປະຕິບັດຢ່າງເປັນເອກະພາບໃນທົ່ວປະເທດ. ກ່ອນໜ້ານັ້ນ, ກົດລະບຽບແມ່ນຖືກສ້າງຂຶ້ນໂດຍອີງການປົກຄອງຕົວເມືອງທີ່ມີລະບົບໂດຍສານລົດໄຟໃຕ້ດິນເພື່ອນຳໃຊ້ເອົາເອງ.




## ກະແຈ

*#ບ່າວກະບື*

ພໍກັບຮອດບ້ານຕອນຄ່ຳມືດປິດຕາ ທ່ານເຕີນ ພົບວ່າເຮືອນໄດ້ປິດໃສ່ກະແຈລັອກແນ່ນ. ຫຼັງຈາກໃຊ້ຄວາມພະຍາຍາມເຂົ້າທາງປ່ອງຢ້ຽມຫຼາຍປ່ອງຢູ່ຊັ້ນລຸ່ມ ແຕ່ບໍ່ໄດ້ຜົນ, ໃນທີ່ສຸດ ລາວເລີຍປີນຂຶ້ນຫຼັງຄາບ່ອນມຸງບລົດທັງຍາກທັງຊາ ແລ້ວກໍຜ່ານປ່ອງຢ້ຽມຊັ້ນສອງເຂົ້າໄປໃນເຮືອນ. ຢູ່ເທິງໂຕະຫ້ອງອາຫານ, ເຂົາເຫັນເຈ້ຍແຜ່ນນ້ອຍທີ່ເມຍຂອງເຂົາ ຂຽນບອກວ່າ "ຂ້ອຍອອກໄປນອກ. ກະແຈນັ້ນໃຫ້ເຈົ້າຊອກໄດ້ເອົາຢູ່ພື້ນຜ້າເຊັດຕີນໜ້າປະຕູເຂົ້າເຮືອນນັ້ນເນີ!".

## THE KEY

*#BAOKBU*

Arriving home on evening, Mr Tern found the house locked up. After trying to get in at the various windows on the ground floor but in vain, he finally climbed upon the shed-roof with much difficulty, entered through a second-story window On the dining room table he found a note from his wife: "I have gone out you'll find the key under the door mat!".

ອ່ານມ່ວນ ຊວນຍິ້ມ



ກ່ອນໄຂປະຕູໃຫ້ເບິ່ງໝູ່ແດ່

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank
ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED
ອຸດສາຫະກຳ ຈົ່ງຈູ້
中鉅實業
ຮ້ານຄຳພູວົງ
PHOUVONG JEWELRY
SCNG
SOMCHAYNEUK GROUP

ຜູ້ຊີ້ນຳ :
ທ່ານ ສີງຄຳ ວົງພະຈັນ
ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ
ຄະນະບັນນາທິການ :
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ
ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ
ອອກແບບ - ຈັດໜ້າ :
ນາງ ບົດຕາ ຄຸນປາກດີ